ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

19-25 ພຶດສະພາ 2023
ປີທີ 12
ສະບັບທີ 923
ລາຍສັບປະດາ

## ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ ຫາລືບັນຫາສຳຄັນຂອງຊາດ



(ສພຊ) ກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ ໄດ້ຈັດຂຶ້ນໃນວັນທີ 15 ພຶດສະພາ 2023 ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ ໂດຍການເປັນປະທານຮ່ວມລະຫວ່າງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ ແລະ ທ່ານ ປອ. ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈຳ, ຮອງນາຍົກລັດຖະມົນຕີ, ກຳມະການຄະນະປະຈຳ ແລະ ບັນດາທ່ານໃນຄະນະລັດຖະບານ.

ໃນກອງປະຊຸມ ໄດ້ຮັບຟັງບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2023 ແລະ ແຜນການ 6 ເດືອນທ້າຍປີ 2023 (ການປະຕິບັດຄາດໝາຍໃຫຍ່ຕາມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX) ແລະ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ (ບັນຫາທີ່ພົ້ນເດັ່ນຕາມມະຕິ ຂອງກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ເລກທີ 03/ສພຊ, ລົງວັນທີ 10/8/2021); ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ (ບັນຫາທີ່ພົ້ນເດັ່ນຕາມມະຕິຂອງກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ເລກທີ 04/ສພຊ, ລົງວັນທີ 10/8/2021); ບົດລາຍງານຂອງລັດຖະບານ ກ່ຽວກັບຜົນສຳເລັດກອງປະຊຸມສຳມະນາວິທະຍາສາດ ກ່ຽວກັບວຽກງານທີ່ດິນ; ບົດລາຍງານຂອງລັດຖະບານ ກ່ຽວກັບວຽກງານການປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ. ຈາກນັ້ນ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳຄິດຄຳເຫັນຕໍ່ບົດລາຍງານດັ່ງກ່າວ.

ໃນຕອນບ່າຍຂອງວັນດຽວກັນ, ກອງປະຊຸມໄດ້ສືບຕໍ່ຮັບຟັງລາຍງານຈາກຕາງໜ້າຄະນະປະຈຳສະພາແຫ່ງຊາດ ເປັນຕົ້ນ: ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການກະກຽມຮ່າງກົດໝາຍທີ່ຈະນຳ

ອ່ານຕໍ່ໜ້າ 2

### ຂ່າວໜ້າໃນ



ກິລາບານເຕະມິດຕະພາບ... (ໜ້າ 2)



ຜົນສຳເລັດຫຼາຍດ້ານ... (ໜ້າ 6)




ຫຼາຍອັນພັນແນວກ່ຽວກັບສາສະໜາ... (ໜ້າ 12)

## ສຳເລັດການເຂົ້າຮ່ວມກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ຜູ້ນຳໄອປາ ທີ່ອິນໂດເນເຊຍ




(ສພຊ) ໃນລະຫວ່າງວັນທີ 10-11 ພຶດສະພາ 2023, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ຜູ້ນຳສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ທີ່ຈັດຂຶ້ນໃນລະຫວ່າງກອງປະຊຸມສຸດຍອດຜູ້ນຳອາຊຽນ ຄັ້ງທີ 42 ທີ່ລາບວນ ບາໂຈ, ສາທາລະນະລັດ ອິນໂດເນເຊຍ.

ໃນກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ຜູ້ນຳໄອປາຄັ້ງນີ້, ມີບັນດາປະມຸກລັດ, ນາຍົກລັດຖະມົນຕີ, ປະທານສະພາແຫ່ງຊາດ, ຄະນະຜູ້ແທນຂອງລັດຖະບານ ແລະ

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຮອງລັດຖະມົນຕີກະຊວງກະສິກຳ ສ.ກູບາ



(ສພຊ) ວັນທີ 10 ພຶດສະພາ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ທັງເປັນປະທານສະມາຄົມມິດຕະພາບ ລາວ-ກູບາ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ໂມຣີ ເຮເຈວາເລຍເບມູເດຣ (Maury Heche-varria Bermudez) ຮອງລັດຖະມົນຕີກະຊວງກະສິກຳຂອງ ສ.ກູບາ ພ້ອມດ້ວຍຄະນະ ເນື່ອງໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ພົບປະເຮັດວຽກຮ່ວມກັບກະຊວງກະສິກຳ ແລະ ປ່າໄມ້ ຂອງ ສປປລາວ ໃນລະຫວ່າງວັນທີ 6-11 ພຶດສະພາ 2023.

ໂອກາດດັ່ງກ່າວ, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ພາກພູມໃຈທີ່ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ແລະ ຕີລາຄາສູງຕໍ່ການ

ອ່ານຕໍ່ໜ້າ 4

## ເຜີຍແຜ່ມູນເຊື້ອອີງການຈັດຕັ້ງກຳມະບານລາວ ແລະ ວັນກຳມະກອນສາກົນ



(ສພຊ) ວັນທີ 12 ພຶດສະພາຜ່ານມາ, ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມເຜີຍແຜ່ມູນເຊື້ອວັນສ້າງຕັ້ງອົງການຈັດຕັ້ງກຳມະບານລາວ ຄົບຮອບ 67 ປີ (1 ກຸມພາ 1956-1 ກຸມພາ 2023), ວັນກຳມະກອນສາກົນ ຄົບຮອບ 137 ປີ (1 ພຶດສະພາ 1886-1 ພຶດສະພາ 2023) ແລະ ສະຫຼຸບ

ອ່ານຕໍ່ໜ້າ 4

## ຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ



(ສພຊ) ວັນທີ 2 ພຶດສະພາຜ່ານມາ, ຢູ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຊຽງຂວາງ ໄດ້ມີກອງປະຊຸມການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ໂດຍການເປັນປະທານຮ່ວມຂອງທ່ານ ຄຳແພງ ວິລະພັນ ກຳມະການຄະນະປະຈຳ, ປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ ແລະ ທ່ານ ວຽງໄຊ ສີວິໄລ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງຊຽງຂວາງ; ເຂົ້າຮ່ວມມີທ່ານ ນາງ ບົວສີ ນາຖາວົງ ຄະປະຈຳພັກແຂວງ, ປະ

ອ່ານຕໍ່ໜ້າ 4

**ຊົມເຊີຍ ວັນຜ່າວົງປິດລ້ອມຂອງກອງພັນທີ 2 ທີ່ທົ່ງໄຫຫີນ ຊຽງຂວາງ (18/05/1959-18/05/2023) ຄົບຮອບ 64 ປີ ຢ່າງສຸດໃຈ!**




## ຄະນະປະຈຳ...

(ຕໍ່ຈາກໜ້າ 1)

ເຂົ້າລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ມີຄວາມລະອຽດອ່ອນ ຄື: ກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ, ກົດໝາຍວ່າດ້ວຍການຈັດຫາງານ, ກົດໝາຍວ່າດ້ວຍການປົກຄອງ, ກົດໝາຍວ່າດ້ວຍອາກອນທີ່ດິນ ລວມທັງລາຍງານວຽກງານການໂຄສະນາເຜີຍແຜ່ກົດໝາຍ; ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນສຳເລັດກອງປະຊຸມສຳມະນາວິທະຍາສາດ ກ່ຽວກັບຫຼັກການ ແລະ ການຈັດສັນແຜນການລົງທຶນຂອງລັດ; ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຫົວຂໍ້ເນື້ອໃນທີ່ຈະນຳເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX. ພ້ອມນັ້ນ, ບັນດາທ່ານຜູ້ເຂົ້າຮ່ວມ ກໍໄດ້ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ.

ຈຸດປະສົງໃນການຈັດກອງປະຊຸມເທື່ອນີ້ ກໍເພື່ອປຶກສາຫາລື ແລະ ຮ່ວມກັນຊອກວິທີແກ້ໄຂບັນຫາເຄັ່ງຮ້ອນ ແລະ ຮີບດ່ວນ ທີ່ເກີດຂຶ້ນໃນສັງຄົມ ທີ່ສົ່ງຜົນກະທົບຕໍ່ການສ້າງສາພັດທະນາເສດຖະກິດ-ສັງຄົມ ໃນປັດຈຸບັນ; ເພື່ອຕິດຕາມ, ຊຸກຍູ້ບັນດາກະຊວງ, ອົງການ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ທີ່ໄດ້ພິຈາລະນາຮັບຮອງເອົາເປັນມະຕິກອງປະຊຸມສະພາແຫ່ງຊາດ ໃນຂອບເຂດວຽກງານຂອງແຕ່ລະພາກສ່ວນ ແລະ ເປັນບ່ອນອີງໃນການແກ້ໄຂບັນຫາຄວາມຫຍຸ້ງຍາກຕ່າງໆ ໃຫ້ໄດ້ຮັບຜົນສຳເລັດ; ເພື່ອຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດຂັ້ນຕ່າງໆ; ເພື່ອສ້າງຄວາມເປັນເອກະພາບ ຕໍ່ກັບວຽກງານຕ່າງໆ ແລະ ຄົ້ນຄວ້າກຳນົດວຽກທີ່ຈະຕ້ອງໄດ້ແກ້ໄຂຮ່ວມກັນ ລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ ກໍຄືບັນດາຫົວຂໍ້ທີ່ຈະພິຈາລະນາໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX.

## ກິລາບານເຕະມິດຕະພາບ 4 ພາກສ່ວນ ຊີງຂັນຄະນະພັກສະພາແຫ່ງຊາດ




(ສພຊ) ຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ ໄດ້ຈັດກິລາບານເຕະມິດຕະພາບ 4 ພາກສ່ວນ ຊີງຂັນຄະນະພັກສະພາແຫ່ງຊາດ ໃນວັນທີ 12 ພຶດສະພາ 2023 ທີ່ເດີ່ນກິລາເຟີຣາລີ້ ໂດຍມີຕາງໜ້າຈາກສະຫະພັນກຳມະບານ 4 ພາກສ່ວນເຂົ້າຮ່ວມ ຄື: ສະພາແຫ່ງຊາດ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ທະນາຄານແຫ່ງ ສປປ ລາວ. ທັງນີ້, ກໍເພື່ອເປັນການຂ່ຳນັບຊົມເຊີຍວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 88 ປີ, ວັນກຳມະກອນສາກົນ ຄົບຮອບ 137 ປີ ແລະ ວັນສ້າງຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ ຄົບຮອບ 58 ປີ ໃຫ້ເປັນຂະບວນການຟົດຟື້ນ ແລະ ຮັດແໜ້ນຄວາມສາມັກຄີຮັກແພງ.

ໃນການແຂ່ງຂັນຄັ້ງນີ້, ໄດ້ແບ່ງອອກເປັນ 2 ປະເພດ ຄື: ປະເພດທີມຍິງ ແລະ ປະເພດທີມຊາຍ ເຊິ່ງຜົນຂອງການແຂ່ງຂັນ ຊະນະເລີດອັນດັບທີ 1 ທີມຍິງ ແລະ ທີມຊາຍ ໄດ້ແກ່ ທະນາຄານແຫ່ງ ສປປລາວ; ອັນດັບທີ 2 ທີມຍິງ ແລະ ທີມຊາຍ ໄດ້ແກ່ ກະຊວງພະລັງງານ ແລະ ບໍ່ແຮ່; ອັນດັບທີ 3 ທີມຍິງ ແລະ ທີມຊາຍ ໄດ້ແກ່ ສະພາແຫ່ງຊາດ ແລະ ອັນດັບທີ 4 ທີມຍິງ ແລະ ທີມຊາຍ ໄດ້ແກ່ ກະຊວງອຸດສາຫະກຳ ແລະ ການຄ້າ; ເຊິ່ງບັນຍາກາດພາຍໃນງານແຂ່ງຂັນກິລາບານເຕະມິດຕະພາບຄັ້ງນີ້ ແມ່ນເຕັມໄປດ້ວຍໄມຕີຈິດມິດຕະພາບ, ຄວາມສາມັກຄີຮັກແພງ ແລະ ຟົດຟື້ນມ່ວນຊື່ນ ເຊິ່ງຄາດວ່າປີຕໍ່ໄປທະນາຄານ ແຫ່ງ ສປປລາວ ຈະໄດ້ຮັບກຽດເປັນເຈົ້າພາບ.

**(ກົງທະນູຄຳ ພິພັດເສລີ)**

## ເລື່ອງເດັ່ນ ຂ່າວເດັດ

**# ຄັດໂດຍ: ທອມສະນິດ**

*❒ ສປປລາວ ຈະເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີທ່ອງທ່ຽວອາຊຽນ ຄັ້ງທີ 27 ASEAN Tourism Forum 2024 (ATF 2024), ກອງປະຊຸມທີ່ກ່ຽວຂ້ອງ ແລະ ງານວາງສະແດງການທ່ອງທ່ຽວອາຊຽນ ຄັ້ງທີ 42 ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 22-27 ມັງກອນ 2024 ທີ່ນະຄອນຫຼວງວຽງຈັນ ພາຍໃຕ້ຄຳຂວັນ ອາຊຽນເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ມີຄຸນນະພາບ ແລະ ມີຄວາມຮັບຜິດຊອບ ເພື່ອເຮັດໃຫ້ອາຊຽນມີຄວາມຍືນຍົງ ໃນອະນາຄົດ "Quality and Re-sponsible Tourism-Sustain-ing ASEAN Future". ສຳລັບການເປັນເຈົ້າພາບໃນຄັ້ງນີ້ ຈະເປັນກາລະໂອກາດທີ່ສຳຄັນ ເພື່ອໂຄສະນາເຜີຍແຜ່ນະໂຍບາຍຂອງພັກ-ລັດ ໃນການພັດທະນາເສດຖະກິດ-ສັງຄົມ ການໂຄສະນາການທ່ອງທ່ຽວລາວໃນເວທີສາກົນ ເປັນການເພີ່ມທະວີການຮ່ວມມືກັບບັນດາປະເທດສະມາຊິກອາຊຽນ, ປະເທດຄູ່ເຈລະຈາ ແລະ ອົງການຈັດຕັ້ງສາກົນ ເພື່ອຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດການທ່ອງທ່ຽວອາຊຽນ 2021-2025.*

***ໜສພ. ວຽງຈັນໃໝ່ 15/05/2023***

*❒ ອົງການຈັດຕັ້ງທາງສັງຄົມ ໄດ້ເຜີຍແຜ່ຜົນການສຶກສາກ່ຽວກັບການຄ້ຳປະກັນດ້ານສະບຽງອາຫານ ຢູ່ໃນ 14 ແຂວງ ແລະ ພົບວ່າ 91% ຂອງຄົວເຮືອນປະສົບບັນຫາດ້ານຄ່າຄອງຊີບ ເນື່ອງຈາກອັດຕາເງິນເຟີ້, ການລະບາດຂອງພະຍາດໂຄວິດ-19 ແລະ ການປ່ຽນແປງຂອງດິນຟ້າອາກາດ ການສຳຫຼວດຄວາມໝັ້ນຄົງດ້ານສະບຽງອາຫານຄັ້ງນີ້ ພົບວ່າ 47% ຂອງຄົວເຮືອນຂາດອາຫານຢ່າງໜ້ອຍໜຶ່ງຄັ້ງ ໃນ 12 ເດືອນທີ່ຜ່ານມາ 31% ຂອງຜູ້ຕອບແບບສອບຖາມ ເຄີຍໄດ້ອຶດເຂົ້າ 56% ຂອງຄົວເຮືອນບໍ່ສາມາດກິນອາຫານທີ່ດີຕໍ່ສຸຂະພາບ ຫຼື ມີໂພຊະນາການໄດ້ຕະຫຼອດປີ ຜູ້ຕອບແບບສອບຖາມ ເຊື່ອວ່າສິ່ງທ້າທາຍຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານຂອງເຂົາເຈົ້າ ແມ່ນເນື່ອງຈາກການເພີ່ມຂຶ້ນຂອງລາຄາອາຫານ 67%, ລາຍຮັບບໍ່ພຽງພໍ 66% ແລະ ການເພີ່ມຂຶ້ນຂອງລາຄານ້ຳມັນ 63% ຜູ້ຕອບແບບສອບຖາມໃຫ້ຮູ້ວ່າ ຄົວເຮືອນຂອງເຂົາເຈົ້າຕ້ອງໃຊ້ມາດຕະການແກ້ໄຂທາງລົບ ເຊັ່ນ: ການຊື້ອາຫານໜ້ອຍລົງ 71%, ການຊື້ອາຫານໃຫ້ໄດ້ຫຼາຍຂຶ້ນ 65%, ກິນໜ້ອຍລົງ 52%, ຢືມເງິນ 41% ແລະ ຂາຍຊັບສິນ 34% ຄົວເຮືອນທີ່ຕອບແບບສອບຖາມຍັງໃຫ້ຮູ້ວ່າມີການຫຼຸດຜ່ອນການໃຊ້ຈ່າຍດ້ານການສຶກສາ 15%, ມີເດັກນ້ອຍຂາດໂຮງຮຽນ ຫຼື ປະລະການຮຽນ 13% ແລະ ຫຼຸດຜ່ອນການໃຊ້ຈ່າຍໃນການຮັກສາສຸຂະພາບທີ່ຈຳເປັນ 12%.*

***ໜສພ. ວຽງຈັນໃໝ່ 16/05/2023***

*❒ ໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ 1 ມິຖຸນາ 2023 ທີ່ຈະມາເຖິງນີ້, ກົມປູກຝັງ ຈະຖືໂອກາດເອົາວັນດັ່ງກ່າວ ຂະຫຍາຍເນື້ອທີ່ປູກພືດ ເປັນຕົ້ນໄມ້ໃຫ້ໝາກ ໂດຍຈະກຳນົດເອົາເມືອງ, ແຂວງ ກໍຄືສຳນັກງານ, ອົງການ, ກະສິກອນ ໃນຂອບເຂດທົ່ວປະເທດເພື່ອລົງຊຸກຍູ້ສົ່ງເສີມການປູກ, ການບົວລະບັດຮັກສາ ໂດຍຈະສະໜອງແນວພັນໄມ້ໃຫ້ໝາກ ເປັນຕົ້ນ ໝາກມີ້, ໝາກມ່ວງ, ໝາກລຳໄຍ, ໝາກລິ້ນຈີ່ ແລະ ອື່ນໆ ໃຫ້ໄດ້ 50 ພັນກວ່າເບ້ຍ, ສະເພາະນະຄອນຫລວງວຽງຈັນຈະສະໜອງໃຫ້ 10 ພັນກວ່າເບ້ຍ ແນໃສ່ເຮັດໃຫ້ເນື້ອທີ່ປູກພືດ ກໍຄືໄມ້ໃຫ້ໝາກຢູ່ ສປປລາວ ຂະຫຍາຍຕົວຂຶ້ນໄປເລື້ອຍໆ ແລະ ກາຍເປັນຜະລິດຕະພັນພືດສົ່ງອອກທັງພາຍໃນ ແລະ ຕ່າງປະເທດ.*

***ໜສພ. ປະເທດລາວ 16/05/2023***

*❒ ອີງຕາມຂໍ້ມູນຈາກພະແນກສາທາລະນະສຸກນະຄອນຫຼວງວຽງຈັນ ໃຫ້ຮູ້ວ່າ: ມາຮອດວັນທີ 11 ພຶດສະພາ 2023 ທົ່ວປະເທດມີຜູ້ຕິດເຊື້ອພະຍາດໄຂ້ຍຸງລາຍສະສົມ 1.933 ຄົນ ຕິດເຊື້ອໃໝ່ 35 ຄົນ ໃນນີ້ແຂວງຄຳມ່ວນ ຕິດເຊື້ອ 340 ຄົນ, ແຂວງອຸດົມໄຊ 306 ຄົນ, ນະຄອນຫຼວງວຽງຈັນ 234 ຄົນ ແລະ ແຂວງອື່ນໆ ກໍມີຕົວເລກຫຼຸດລົງຕາມລຳດັບ ສຳລັບອາການຂອງຄົນທີ່ເປັນພະຍາດໄຂ້ຍຸງລາຍ ຫຼື ໄຂ້ເລືອດອອກ ມີໄຂ້ສູງ 2-3 ວັນ ປວດຫົວ ປວດກະໂບງຕາ ປວດກ້າມຊີ້ນ ປວດຕາມຂໍ້ກະດູກ ປວດຮາກ ມີຜື່ນແດງຕາມຜິວໜັງ ເລືອດຊຶມຕາມເຍື່ອເມືອກ ຖ້າຮຸນແຮງຈະເກີດມີອາການຊ໊ອກ ສະນັ້ນ, ເມື່ອທ່ານ ແລະ ຄົນໃນຄອບຄົວຂອງທ່ານຮູ້ສຶກບໍ່ສະບາຍ ເປັນໄຂ້ ໃຫ້ຮີບຮ້ອນໄປພົບແພດໝໍໂດຍດ່ວນ ເພື່ອໃຫ້ແພດໝໍບົ່ງມະຕິ ແລະ ກິນຢາຕາມແພດສັ່ງໃຫ້ຖືກວິທີ ແລະ ປິ່ນປົວຕາມອາການໃຫ້ທັນເວລາ ຫ້າມບໍ່ໃຫ້ຊື້ຢາມາກິນເອງ.*

***ໜສພ. ວຽງຈັນໃໝ່ 17/05/2023***

## ສຳເລັດ...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດ ຈາກປະເທດສະມາຊິກອາຊຽນ ພ້ອມດ້ວຍເລຂາທິການໃຫຍ່ອາຊຽນ ແລະ ເລຂາທິການໃຫຍ່ໄອປາ ເຂົ້າຮ່ວມ ໂດຍໄດ້ປຶກສາຫາລືຫຼາຍບັນຫາສຳຄັນເປັນຄວາມກັງວົນຮ່ວມກັນ ແລະ ສິ່ງທີ່ທ້າທາຍຕໍ່ການບັນລຸເປົ້າໝາຍການສ້າງປະຊາຄົມອາຊຽນ; ໂອກາດນີ້, ຜູ້ນຳໄອປາ ໄດ້ຕີລາຄາສູງ ແລະ ສະແດງຄວາມຊົມເຊີຍຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດຂອງອາຊຽນໃນໄລຍະຜ່ານມາ ລວມໄປເຖິງການຮັກສາສັນຕິພາບ, ສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງອາຊຽນ ໃນທາມກາງສະພາບການຂອງພາກພື້ນ ແລະ ສາກົນ ຍັງສືບຕໍ່ຜັນແປໄປຢ່າງສັບສົນ. ພ້ອມດຽວກັນນັ້ນ, ຜູ້ນຳໄອປາ ໄດ້ເນັ້ນໜັກເຖິງການປະສານສົມທົບກັນຢ່າງແໜ້ນແຟ້ນລະຫວ່າງຝ່າຍບໍລິຫານ ແລະ ຝ່າຍນິຕິບັນຍັດຂອງອາຊຽນ ໃນການເສີມຂະຫຍາຍທ່າແຮງເພື່ອສ້າງຄວາມຈະເລີນຮຸ່ງເຮືອງໃຫ້ແກ່ປະຊາຊົນອາຊຽນ, ໂດຍສະເໜີໃຫ້ຜູ້ນຳອາຊຽນ ສືບຕໍ່ຮັກສາສັນຕິພາບ, ຄວາມເປັນເອກະພາບ ແລະ ຄວາມເປັນແກນກາງຂອງອາຊຽນ; ເສີມຂະຫຍາຍຄວາມສາມາດໃນການຕອບສະໜອງທາງດ້ານພະລັງງານ ແລະ ຄວາມໝັ້ນຄົງທາງດ້ານສະບຽງອາຫານໃນອາຊຽນ; ສືບຕໍ່ສົ່ງເສີມການລົງທຶນສີຂຽວ, ຄວາມສະເໝີພາບ ແລະ ຄວາມຍືນຍົງທາງດ້ານການເງິນ; ປັບປຸງແຜນງານ, ກອບກົດໝາຍ ແລະ ນະໂຍບາຍ ເພື່ອບັນລຸຂໍ້ລິເລີ່ມ ແລະ ຂໍ້ຕົກລົງສີຂຽວອາຊຽນ; ປັບປຸງປະສິດທິພາບການເຄື່ອນໄຫວຂອງບັນດາກົນໄກຂອງອາຊຽນ ແລະ ລະຫວ່າງອາຊຽນ ກັບບັນດາຄູ່ຮ່ວມພັດທະນາ; ສົ່ງເສີມນະວັດຕະກຳ, ການຖ່າຍທອດການນຳໃຊ້ ແລະ ການພັດທະນາທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ; ຊຸກຍູ້ການເຕີບໂຕດ້ານເສດຖະກິດທີ່ເຂັ້ມແຂງ, ຮັດແຄບຊ່ອງຫວ່າງຂອງການພັດທະນາ, ເສີມສ້າງຄວາມເຂັ້ມແຂງພາຍໃນພາກພື້ນ ໃຫ້ມີການຂະຫຍາຍຕົວ ແລະ ການພັດທະນາແບບຍືນຍົງຕາມທິດທາງຂອງອາຊຽນ.

ກ່ອນການເຂົ້າຮ່ວມກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ຜູ້ນຳໄອປາ, ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ສົມຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ກໍໄດ້ປະຊຸມຮ່ວມກັບຄະນະຜູ້ແທນຈາກສະມາຊິກໄອປາ ທີ່ນຳໂດຍຂັ້ນປະທານ, ຮອງປະທານ ແລະ ສະມາຊິກສະພາແຫ່ງຊາດ ຈາກ 9 ປະເທດ ຄື: ບຣູໄນ, ກຳປູເຈຍ, ອິນໂດເນເຊຍ, ລາວ, ຫວຽດນາມ, ສິງກະໂປ, ມາເລເຊຍ, ຟີລິບປິນ ແລະ ໄທ ພ້ອມດ້ວຍເລຂາທິການໃຫຍ່ໄອປາ ເພື່ອຄົ້ນຄວ້າປຶກສາຫາລືຕໍ່ຮ່າງເນື້ອໃນສານຂອງຜູ້ນຳໄອປາທີ່ຈະສະເໜີຕໍ່ຜູ້ນຳອາຊຽນ. ໃນກອງປະຊຸມດັ່ງກ່າວ, ຄະນະຜູ້ແທນສະພາແຫ່ງຊາດລາວໄດ້ແລກປ່ຽນຄຳຄິດຄຳເຫັນຕໍ່ຮ່າງສານດັ່ງກ່າວ ໂດຍໄດ້ເນັ້ນໜັກເຖິງການເພີ່ມທະວີຄວາມໝັ້ນຄົງ, ສົ່ງເສີມນະໂຍບາຍເພື່ອສ້າງຄວາມເຂັ້ມແຂງແກ່ອາຊຽນ, ເພີ່ມທະວີການເຊື່ອມໂຍງ ແລະ ສົ່ງເສີມການເຊື່ອມຈອດທາງດ້ານເສດຖະກິດຂອງພາກພື້ນກັບທົ່ວໂລກ, ຫຼຸດຜ່ອນຊ່ອງຫວ່າງຂອງການພັດທະນາ ແລະ ພ້ອມກັນກ້າວໄປໂດຍບໍ່ປະຖິ້ມໃຜໄວ້ເບື້ອງຫຼັງ.

ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ພົບປະປຶກສາຫາລືແບບບໍ່ເປັນທາງການກັບຄະນະຜູ້ແທນ ສສ.ຫວຽດນາມ, ກຳປູເຈຍ, ໄທ ແລະ ເລຂາທິການໃຫຍ່ໄອປາ ເພື່ອປຶກສາຫາລືກ່ຽວກັບການພົວພັນຮ່ວມມື ແລະ ການສະໜັບສະໜູນເຊິ່ງກັນແລະກັນໃນຕໍ່ໜ້າ.





# ປະທານ ກສຕສ ສຳເລັດການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂົງເຂດເສດຖະກິດ ຢູ່ 2 ແຂວງພາກໃຕ້



(ສພຊ) ໃນວັນທີ 8 ພຶດສະພາຜ່ານມາ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ສຳເລັດການເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂົງເຂດເສດຖະກິດຢູ່ແຂວງຈຳປາສັກ ຕາງໜ້າຄະນະນຳຂອງແຂວງຈຳປາສັກ ໃຫ້ການຕ້ອນຮັບຄະນະໂດຍທ່ານ ສາຍທອງ ໄຊຍະວົງຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ທັງເປັນປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ເຊິ່ງຄະນະໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານການສົ່ງເສີມການຜະລິດກະສິກຳ, ການຄຸ້ມຄອງການນຳເຂົ້າສິນຄ້າ, ການຄຸ້ມຄອງລາຄາສິນຄ້າ ແລະ ການຟື້ນຟູປ່າໄມ້ຢູ່ແຂວງຈຳປາສັກ ຈາກພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ. ຈາກນັ້ນ, ຄະນະ ກໍໄດ້ເຄື່ອນໄຫວຢ້ຽມຢາມດ່ານສາກົນວັງເຕົ່າ, ເຂດພັດທະນາທ່າບົກວັງເຕົ່າ ແລະ ເຂດພື້ນຖານໂຄງລ່າງຜະລິດກະສິກຳເປັນສິນຄ້າ ຢູ່ເມືອງປາກຊ່ອງ.




ຈາກນັ້ນ, ວັນທີ 9-10 ພຶດສະພາ, ຄະນະ ໄດ້ສືບຕໍ່ເຄື່ອນໄຫວຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂົງເຂດເສດຖະກິດຮ່ວມກັບສະພາປະຊາຊົນແຂວງສາລະວັນ ແລະ ຂະແໜງການທີ່ກ່ຽວຂ້ອງ ຢູ່ແຂວງສາລະວັນ ໂດຍການຕ້ອນຮັບ ແລະ ເຮັດວຽກຮ່ວມກັບທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງສາລະວັນ ພ້ອມດ້ວຍຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ເຈົ້າແຂວງ, ເຈົ້າເມືອງ ແລະ ບັນດາຫົວໜ້າຂະແໜງການທີ່ກ່ຽວຂ້ອງ.

ໂອກາດດັ່ງກ່າວ, ໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານນະໂຍບາຍ ແລະ ນິຕິກຳ ທີ່ຕິດພັນກັບການສົ່ງເສີມການຜະລິດກະສິກຳ, ການຄຸ້ມຄອງການນຳເຂົ້າສິນຄ້າ, ການຄຸ້ມຄອງລາຄາສິນຄ້າ, ການຟື້ນຟູປ່າໄມ້ ແລະ ຕິດຕາມສະພາບການຄຸ້ມຄອງດ່ານຊາຍແດນ ແລະ ແຜນຄວາມຄືບໜ້າກະກຽມສ້າງຂົວມິດຕະພາບຊາຍແດນ ລະຫວ່າງດ່ານປາກຕະພານ ເມືອງລະຄອນເພັງ ແລະ ດ່ານປາກແຊງ ອຳເພີນາຕານ ຈັງຫວັດອຸບົນ ປະເທດໄທ.

ໃນການເຄື່ອນໄຫວຕິດຕາມກວດກາຄັ້ງນີ້, ກໍແມ່ນເພື່ອເກັບກຳເອົາຂໍ້ມູນຂອງແຂວງເພື່ອນຳສະເໜີຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ເປັນຂໍ້ມູນໃຫ້ແກ່ກອງປະຊຸມຮ່ວມລະຫວ່າງລັດຖະບານກັບສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະມາເຖິງ.

**(ນັກຂ່າວ: ກສຕສ)**







| ກວດວິເຄາະ | ຕິດເຊື້ອໃໝ່ | ຕິດເຊື້ອລວມ | ເສຍຊີວິດໃໝ່ | ເສຍຊີວິດສະສົມ |
|---|---|---|---|---|
| 195 | 7 | 218,189 | 0 | 671 |

| ແຂວງ | ກວດເຊື້ອ | ພາຍໃນ | ນຳເຂົ້າ | ແຂວງ | ກວດເຊື້ອ | ພາຍໃນ | ນຳເຂົ້າ |
|---|---|---|---|---|---|---|---|
| • ນະຄອນຫຼວງວຽງຈັນ | 9 | 1 | 0 | • ເຊກອງ | 0 | 0 | 0 |
| • ສະຫວັນນະເຂດ | 8 | 4 | 0 | • ຫຼວງພະບາງ | 36 | 0 | 0 |
| • ຈຳປາສັກ | 53 | 2 | 0 | • ວຽງຈັນ | 0 | 0 | 0 |
| • ຄຳມ່ວນ | 49 | 0 | 0 | • ໄຊສົມບູນ | 0 | 0 | 0 |
| • ຫຼວງນ້ຳທາ | 1 | 0 | 0 | • ບໍ່ແກ້ວ | 0 | 0 | 0 |
| • ສາລະວັນ | 14 | 0 | 0 | • ອຸດົມໄຊ | 0 | 0 | 0 |
| • ຊຽງຂວາງ | 0 | 0 | 0 | • ຜົ້ງສາລີ | 0 | 0 | 0 |
| • ຫົວພັນ | 25 | 0 | 0 | • ອັດຕະປື | 0 | 0 | 0 |
| • ໄຊຍະບູລີ | 0 | 0 | 0 | • ບໍລິຄຳໄຊ | 0 | 0 | 0 |

## ຮອງປະທານ...

(ຕໍ່ຈາກໜ້າ 1)



ມາຢ້ຽມຢາມ ສປປລາວ ຂອງສະຫາຍ ໂມຣີ ເຣເຈວາເລຍ ເບມູເດຣ ພ້ອມດ້ວຍຄະນະ ເຊິ່ງເປັນການປະກອບສ່ວນອັນສຳຄັນ ໃນການເພີ່ມທະວີ ແລະ ຮັດແໜ້ນສາຍພົວພັນມິດຕະພາບອັນເປັນມູນເຊື້ອດີງາມຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ ແລະ ກູບາ ໃຫ້ນັບມື້ຂະຫຍາຍຕົວ ແລະ ເກີດດອກອອກຜົນຢ່າງບໍ່ຢຸດຢັ້ງ, ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດໃນການຕໍ່ສູ້ປົກປ້ອງໝາກຜົນອັນຍິ່ງໃຫຍ່ຂອງການປະຕິວັດກູບາ ໂດຍສະເພາະພາຍໃຕ້ການນຳພາອັນຖືກຕ້ອງຂອງພັກກອມມູນິດກູບາ ເຮັດໃຫ້ ສ.ກູບາ ໄດ້ຮັບການພັດທະນາຮອບດ້ານ ແລະ ຕໍ່ເນື່ອງ. ຕະຫຼອດໄລຍະຫຼາຍທົດສະວັດຜ່ານມາ, ປະຊາຊົນກູບາ ບໍ່ພຽງແຕ່ສາມາດປົກປັກຮັກສາລະບອບການເມືອງ, ເສດຖະກິດ ແລະ ສັງຄົມຂອງຕົນໄວ້ໄດ້ຢ່າງໝັ້ນຄົງເທົ່ານັ້ນ ແຕ່ຫາກຍັງສາມາດພັດທະນາປະເທດ ໃຫ້ນັບມື້ເຂັ້ມແຂງ ແລະ ຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງ ເຮັດໃຫ້ຖານະບົດບາດຂອງກູບາ ເປັນທີ່ຍອມຮັບຈາກເພື່ອນມິດສາກົນ ແລະ ນັບມື້ໄດ້ຮັບການຍົກສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ. ສະຫາຍຮອງປະທານສະພາແຫ່ງຊາດ ພາກພູມໃຈທີ່ເຫັນສາຍພົວພັນມິດຕະພາບ ແລະ ການຮ່ວມມື ລາວ-ກູບາ, ກູບາ-ລາວ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ ສະແດງອອກໃນການແລກປ່ຽນຢ້ຽມຢາມ ລະຫວ່າງການນຳຂັ້ນສູງຂອງສອງປະເທດ ເຖິງແມ່ນວ່າຈະຢູ່ຫ່າງໄກກັນຄືນລະທະວີບກໍຕາມ ແຕ່ຍັງໄປມາຫາສູ່ກັນປົກກະຕິ ສະແດງໃຫ້ເຫັນເຖິງສາຍພົວພັນມິດຕະພາບອັນເປັນມູນເຊື້ອຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ກູບາ ນັບມື້ໄດ້ຮັບການເສີມຂະຫຍາຍຢ່າງບໍ່ຢຸດຢັ້ງການຮ່ວມມືໄດ້ຮັບການເສີມຂະຫຍາຍໃນຫຼາຍຂົງເຂດ ເປັນຕົ້ນແມ່ນດ້ານການສຶກສາ, ສາທາລະນະສຸກ, ກະສິກຳ ແລະ ການແລກປ່ຽນສິລະປະວັດທະນະທຳ; ນອກຈາກນີ້, ສະຫາຍຮອງປະທານສະພາແຫ່ງຊາດລາວຍັງໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ພັກ, ລັດ ແລະ ປະຊາຊົນ ກູບາ ໃນການຊ່ວຍເຫຼືອອັນໃຫຍ່ຫຼວງລ້ຳຄ່າ ແລະ ຈິງໃຈ ຕໍ່ພັກ, ລັດ ແລະ ປະຊາຊົນລາວ ໃນພາລະກິດຕໍ່ສູ້ກູ້ຊາດ ໃນເມື່ອກ່ອນ ກໍຄືໄລຍະປົກປັກຮັກສາປະເທດຊາດໃນປັດຈຸບັນ ແລະ ໄດ້ແຈ້ງໃຫ້ຮູ້ສະພາບຄວາມເປັນມາ ແລະ ການເຄື່ອນໄຫວຂອງສະມາຄົມມິດຕະພາບ ລາວ-ກູບາ ພ້ອມທັງສະເໜີໃຫ້ສະຫາຍ ໂມຣີ ເຣເຈວາເລຍ ເບມູເດຣ ໃຫ້ມີຄຳເຫັນຊຸກຍູ້ຕື່ມຕໍ່ການເຄື່ອນໄຫວຂອງສະມາຄົມມິດຕະພາບສອງຝ່າຍ ລາວ ແລະ ກູບາ ເພື່ອເຮັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນຂຶ້ນຕື່ມ.

ຈາກນັ້ນ, ສະຫາຍ ໂມຣີ ເຣເຈວາເລຍ ເບມູເດຣ ໄດ້ກ່າວສະແດງຄວາມຂອບໃຈເປັນຢ່າງສູງທີ່ສະຫາຍຮອງປະທານສະພາແຫ່ງຊາດລາວ ທີ່ໄດ້ເສຍສະຫຼະເວລາອັນມີຄຸນຄ່າໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ແຈ້ງໃຫ້ຮູ້ກ່ຽວກັບການພົບປະເຮັດວຽກຮ່ວມກັບກະຊວງກະສິກຳ ແລະ ປ່າໄມ້ ຂອງ ສປປລາວ ເຊິ່ງສອງຝ່າຍກໍເປັນເອກະພາບຈະເພີ່ມທະວີການຮ່ວມມືທາງດ້ານກະສິກຳ ໂດຍສະເພາະປູກເຂົ້າ ແລະ ຄົ້ນຄວ້າແນວພັນເຂົ້າຂອງລາວ ເພື່ອນຳໄປປູກຢູ່ ສ.ກູບາ. ພ້ອມທັງເຫັນດີຈະສືບຕໍ່ການເຄື່ອນໄຫວຂອງສະມາຄົມມິດຕະພາບສອງຝ່າຍ ລາວ ແລະ ກູບາ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດທີ່ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນກວ່າເກົ່າ.

**(ສອນສັກ ວັນວິໄຊ)**

---

## ຕິດຕາມ...

(ຕໍ່ຈາກໜ້າ 1)

ທານແນວລາວສ້າງຊາດແຂວງ, ມີບັນດາທ່ານປະທານ-ຮອງປະທານຄະນະກຳມະການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງຂອງແຂວງ, ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍທີມງານຈາກສະພາແຫ່ງຊາດ ແລະ ພະນັກງານຂອງສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຈາກຕາງໜ້າສານປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນແຂວງ ເຊິ່ງໃນໄລຍະຜ່ານມາ ສາມາດປະຕິບັດໄດ້ດີໃນຫຼາຍດ້ານ ໃນການປະຕິບັດໜ້າທີ່ວຽກງານ, ການຄົ້ນຄວ້າ, ແກ້ໄຂຕໍ່ກັບບັນຫາຕ່າງໆທີ່ເກີດຂຶ້ນຢູ່ພາຍໃນແຂວງ, ໄດ້ເອົາໃຈໃສ່ຜັນຂະຫຍາຍບັນດາເນື້ອໃນມາດຕາຂອງກົດໝາຍອອກເປັນນິຕິກຳໃຕ້ກົດໝາຍ ພ້ອມທັງລົງໂຄສະນາເຜີຍແຜ່ໃຫ້ທົ່ວເຖິງທ້ອງຖິ່ນແລະຮາກຖານ ຄຽງຄູ່ກັບດ້ານດີຍັງມີດ້ານຄົງຄ້າງທີ່ຍັງຈະຕ້ອງປັບປຸງແກ້ໄຂ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ວຽກງານມີບາດກ້າວໃໝ່ທີ່ດີຂຶ້ນ ເຊິ່ງບັນດາຜູ້ແທນເຂົ້າຮ່ວມກອງປະຊຸມ ໄດ້ຍົກຂຶ້ນມາແລກປ່ຽນໃນບາງມາດຕາຂອງກົດໝາຍທີ່ເຫັນວ່າຍັງບໍ່ສອດຄ່ອງ, ບັນຫາທີ່ຫຍຸ້ງຍາກໃນການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ເພື່ອເປັນຂໍ້ມູນໃນການປັບປຸງ, ສ້າງກົດໝາຍໃນຕໍ່ໜ້າ ໃຫ້ແທດເໝາະ, ຖືກຕ້ອງສອດຄ່ອງກັບສະພາບຕົວຈິງໃນປັດຈຸບັນ.

ໃນຕອນທ້າຍ, ຄະນະປະທານກອງປະຊຸມ ຍັງໄດ້ມີຄຳເຫັນໂອ້ລົມ ແລະ ສັງລວມບັນດາຄຳຄິດຄຳເຫັນຂອງຜູ້ແທນກອງປະຊຸມເພື່ອນຳໄປຄົ້ນຄວ້າ ເພື່ອປັບປຸງແກ້ໄຂໃນຕໍ່ໜ້າ.

**(ບຸນສີ ສິດທິເດດ)**

## ເຜີຍແຜ່ມູນເຊື້ອ...

(ຕໍ່ຈາກໜ້າ 1)

ຕີລາຄາການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງສະຫະພັນກຳມະບານສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ອຳໄພ ຈິດມານົບ ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ ເຂົ້າຮ່ວມມີສະຫາຍ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ຄະນະປະຈຳພັກສະພາແຫ່ງຊາດ, ຜູ້ຊີ້ນຳອົງການຈັດຕັ້ງມະຫາຊົນສະພາແຫ່ງຊາດ ແລະ ສະຫາຍ ພອນສານ ວິໄລເມັງ ຮອງປະທານສູນກາງສະຫະພັນກຳມະບານລາວ; ມີສະຫາຍຈາກສູນກາງສະຫະພັນກຳມະບານລາວ; ຕາງໜ້າອົງການຈັດຕັ້ງມະຫາຊົນຂອງສະພາແຫ່ງຊາດ, ບັນດາສະຫາຍຮອງປະທານ, ຄະນະກຳມະບານຮາກຖານ ແລະ ສະມາຊິກກຳມະບານທົ່ວສະພາແຫ່ງຊາດເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການເຜີຍແຜ່ມູນເຊື້ອວັນສ້າງຕັ້ງກຳມະບານລາວ ຄົບຮອບ 67 ປີ (1 ກຸມພາ 1956-1 ກຸມພາ 2023) ແລະ ວັນກຳມະກອນສາກົນ ຄົບຮອບ 137 ປີ (1 ພຶດສະພາ 1886-1 ພຶດສະພາ 2023) ຈາກສະຫາຍ ອຳໄພ ຈິດມານົບ; ການຜ່ານບົດສະຫຼຸບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວ ປະຈຳປີ 2023 ຂອງສະຫະພັນກຳມະບານສະພາແຫ່ງຊາດ ຈາກສະຫາຍ ຄຳແທ່ນ ວິລະກຸນ ກຳມະການຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ; ຜ່ານຂໍ້ຕົກລົງຂອງສູນກາງສະຫະພັນກຳມະບານລາວ ກ່ຽວກັບການຍັ້ງຢືນ 5 ເປັນເຈົ້າ ຈາກສະຫາຍ ນາງ ຈັນເພັດ ມະນີແສງ ຫົວໜ້າກົມຂະບວນການ ສູນກາງສະຫະພັນກຳມະບານລາວ; ຈາກນັ້ນ, ໄດ້ມີພິທີມອບໃບຍັ້ງຢືນ 5 ເປັນເຈົ້າ ໃຫ້ແກ່ສະຫະພັນກຳມະບານສະພາແຫ່ງຊາດ ແລະ ໄດ້ຜ່ານຂໍ້ຕົກລົງຂອງຄະນະພັກສະພາແຫ່ງຊາດ ກ່ຽວກັບການຍັ້ງຢືນ 5 ເປັນເຈົ້າ; ພ້ອມນັ້ນ, ກໍໄດ້ມອບໃບຍັ້ງຢືນ 5 ເປັນເຈົ້າ ໃຫ້ແກ່ບັນດາຮາກຖານກຳມະບານສະພາແຫ່ງຊາດ.

ໃນໂອກາດນີ້, ສະຫາຍ ຣສ. ປອ. ລິນຄຳ ດວງສະຫວັນ ໄດ້ມີຄຳເຫັນໂອ້ລົມວ່າ: ກອງປະຊຸມ ໄດ້ຮັບຟັງການເຜີຍແຜ່ມູນເຊື້ອການກຳເນີດແລະການເຕີບໃຫ່ຍຂະຫຍາຍຕົວຂອງອົງການກຳມະບານລາວ ຄົບຮອບ 67 ປີ ແລະ ການກຳນົດທິດທາງລວມ ແລະ ວຽກງານຈຸດສຸມປະຈຳປີ 2023 ຂອງອົງການກຳມະບານລາວ. ເຊິ່ງການເຜີຍແຜ່ເຊື່ອມຊຶມເນື້ອໃນດັ່ງກ່າວ ໄດ້ເປັນບົດຮຽນໃຫ້ສະມາຊິກກຳມະບານທຸກສະຫາຍ ໃຫ້ຮັບຮູ້ເຂົ້າໃຈກ່ຽວກັບອົງການຈັດຕັ້ງກຳມະບານລາວຢ່າງເລິກເຊິ່ງຕື່ມ. ພ້ອມທັງໄດ້ປາຖະກະຖາ ກ່ຽວກັບວັນກຳມະກອນສາກົນ ຄົບຮອບ 137 ປີ ເຊິ່ງໄດ້ຍົກໃຫ້ເຫັນປະຫວັດຄວາມເປັນມາຂອງກຳມະກອນສາກົນ ວັນທີ 1 ພຶດສະພາ, ຍົກໃຫ້ເຫັນບັນດາອົງການຈັດຕັ້ງ, ສົນທິສັນຍາ, ຖະແຫຼງການ ແລະ ກອງປະຊຸມຕ່າງໆ ກ່ຽວກັບກຳມະກອນ ແລະ ຜູ້ອອກແຮງງານໃນພາກພື້ນ ແລະ ສາກົນ ພ້ອມທັງການປະກອບສ່ວນໃນພາລະກິດປະຕິວັດຂອງກຳມະກອນລາວຕະຫຼອດໄລຍະຜ່ານມາເຖິງປະຈຸບັນ ໂດຍພາຍໃຕ້ຄຳຂວັນ: "ສ້າງສະພາບແວດລ້ອມໃນການເຮັດວຽກທີ່ປອດໄພ ແລະ ດີຕໍ່ສຸຂະພາບແມ່ນສິດທິພື້ນຖານຂອງທຸກຄົນ". ເນື້ອໃນດັ່ງກ່າວ ມີຄວາມສຳຄັນຫຼາຍຕໍ່ກັບການເຄື່ອນໄຫວຂອງກຳມະກອນລາວ ເວົ້າລວມ, ເວົ້າສະເພາະ ສະມາຊິກພັກ, ສະມາຊິກກຳມະບານ ແລະ ພະນັກງານທີ່ເປັນເສນາທິການຂອງສະພາແຫ່ງຊາດ ຈະຕ້ອງໄດ້ສືບຕໍ່ຄົ້ນຄວ້າກຳແໜ້ນ ເພື່ອປະກອບສ່ວນໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບການເຄື່ອນໄຫວວຽກງານຕົວຈິງຂອງຕົນ; ພ້ອມນັ້ນ, ກອງປະຊຸມ ຍັງໄດ້ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງສະຫະພັນກຳມະບານສະພາແຫ່ງຊາດ ເຊິ່ງໄດ້ສະຫຼຸບຕີລາຄາການເຄື່ອນໄຫວໃນປີ 2022 ທີ່ມີທັງດ້ານດີ, ດ້ານອ່ອນຂໍ້ຄົງຄ້າງ, ສາຍເຫດທີ່ພາໃຫ້ມີດ້ານດີ, ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນຖອດຖອນໄດ້. ພ້ອມກັນນັ້ນ, ກໍໄດ້ວາງທິດທາງແຜນການ ປະຈຳປີ 2023; ຈາກນັ້ນ, ສະຫາຍ ຍັງໄດ້ສະແດງຄວາມເປັນເອກະພາບ ແລະ ຕີລາຄາສູງ ຕໍ່ກັບຜົນສຳເລັດໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັ້ນ 5 ເປັນເຈົ້າ ປະຈຳປີ 2022 ຕິດພັນກັບຂະບວນການຮັກຊາດ ແລະ ພັດທະນາ, ການສ້າງພັກປອດໃສເຂັ້ມແຂງ ແລະ ໜັກແໜ້ນ ຍ້ອນຄວາມເອົາໃຈໃສ່ຂອງຄະນະບໍລິຫາງານສະຫະພັນກຳມະບານສະພາແຫ່ງຊາດ ແລະ ສະມາຊິກກຳມະບານທຸກສະຫາຍ ຈຶ່ງສາມາດຍາດໄດ້ການຍັ້ງຢືນຂະບວນການແຂ່ງຂັນ 5 ເປັນເຈົ້າ ຂອງສູນກາງກຳມະບານລາວ ແລະ ບັນດາຮາກຖານກຳມະບານສະພາແຫ່ງຊາດ 10 ຮາກຖານ ກໍໄດ້ຮັບການຍັ້ງຢືນຂອງສະຫະພັນກຳມະບານສະພາແຫ່ງຊາດ.

**(ສຸພາວັນ ທອມສະນິດ)**



# ປະດັບຫຼຽນໄຊ, ຫຼຽນກາ ແລະ ມອບໃບຍ້ອງຍໍຜົນງານ 5 ປີ



(ສພຊ) ພິທີປະດັບຫຼຽນໄຊ, ຫຼຽນກາແຮງງານ ແລະ ມອບໃບຍ້ອງຍໍບຸກຄົນທີ່ມີຜົນງານດີເດັ່ນ ໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ 2016-2020 ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 8 ພຶດສະພາ 2023 ທີ່ ສະພາປະຊາຊົນແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ I, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານ-ວິຊາການພາຍໃນສະພາປະຊາຊົນແຂວງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ໃນພິທີໄດ້ຮັບຟັງການຜ່ານບົດສະຫຼຸບຜົນງານ 5 ປີ 2016-2020, ບົດສະຫຼຸບແຂ່ງຂັນຂັນຍ້ອງຍໍ ປະຈຳປີ 2022, ດຳລັດຂອງປະທານປະເທດ ສະບັບເລກທີ 167/ປປທ, ລົງວັນທີ 14/9/2022; ຜ່ານດຳລັດຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 369/ນຍ, ລົງວັນທີ 24/9/2022 ແລະ ຂໍ້ຕົກລົງຂອງເຈົ້າແຂວງ ສະບັບເລກທີ 597/ຈຂ.ຄມ, ລົງວັນ 28 ພຶດສະພາ 2021.

ຈາກນັ້ນ, ໄດ້ມີພິທີມອບຫຼຽນໄຊ, ຫຼຽນກາ ແລະ ມອບໃບຍ້ອງຍໍຜົນງານ 5 ປີ (2016-2020) ໃນນັ້ນ, ຫຼຽນໄຊແຮງງານຊັ້ນ I ມີ 3 ທ່ານ, ຫຼຽນໄຊແຮງງານຊັ້ນ II ມີ 1 ທ່ານ, ຫຼຽນໄຊແຮງງານຊັ້ນ III ມີ 8 ທ່ານ ຍິງ 3 ທ່ານ, ຫຼຽນກາແຮງງານມີ 6 ທ່ານ ຍິງ 3 ທ່ານ, ໃບຍ້ອງຍໍລັດຖະບານມີ 3 ທ່ານ ຍິງ 3 ທ່ານ ແລະ ໃບຍ້ອງຍໍທ່ານເຈົ້າແຂວງມີ 11 ທ່ານ ຍິງ 7 ທ່ານ ເຊິ່ງຜົນງານດັ່ງກ່າວເປັນການປະກອບສ່ວນອັນສຳຄັນໃຫ້ແກ່ການພັດທະນາປະເທດຊາດກໍຄືແຂວງຄຳມ່ວນ.

ໃນໂອກາດນີ້, ໄດ້ສະຫຼຸບວຽກງານການຈັດຕັ້ງປະຕິບັດຂະບວນການແຂ່ງຂັນຍ້ອງຍໍພາຍໃຕ້ຄຳຂວັນຮັກຊາດ ແລະ ພັດທະນາ ປະຈຳປີ 2022 ພ້ອມທັງເປີດຂະບວນການແຂ່ງຂັນຍ້ອງຍໍ ປະຈຳປີ 2023 ໂດຍມີບັນດາຂະແໜງການຊ່ວຍວຽກພາຍໃນສະພາປະຊາຊົນແຂວງ ຂຶ້ນຈັບມືຮັບຮອງເອົາຫົວຂໍ້ແຂ່ງຂັນຍ້ອງຍໍ ພາຍໃຕ້ຄຳຂວັນ ຮັກຊາດ ແລະ ພັດທະນາ ປະຈຳປີ 2023.

ໂອກາດດັ່ງກ່າວ, ທ່ານ ບຸນມີ ພິມມະສອນ ໄດ້ມີຄຳເຫັນໂອ້ລົມຍ້ອງຍໍຊົມເຊີຍຜົນງານ 5 ປີທີ່ຍາດມາໄດ້ ພ້ອມທັງຮຽກຮ້ອງຄະນະພັກ, ສະມາຊິກພັກ ແລະ ພະນັກງານ ຕ້ອງກຳແໜ້ນຈຸດປະສົງ, ຄາດໝາຍ ແລະ ເນື້ອໃນຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ໃຫ້ເລິກເຊິ່ງ, ບັນດາເນື້ອໃນໃຫ້ລະອຽດຈະແຈ້ງ ແລະ ໃຫ້ບັນລຸຕາມ 4 ຄາດໝາຍ; ຕ້ອງຖືເອົາວຽກງານແຂ່ງຂັນຮັກຊາດ ແລະ ພັດທະນາເປັນວຽກຍຸດທະສາດໃນດ້ານການເມືອງ, ການປົກຄອງ, ການພັດທະນາເສດຖະກິດ-ສັງຄົມ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຖືວຽກແຂ່ງຂັນຮັກຊາດ ແລະ ພັດທະນາເປັນທັງທິດທາງລວມ ທັງເປັນເນື້ອໃນວຽກງານຂອງຂົງເຂດ ຫຼື ຂະແໜງການຕົນຢ່າງຈະແຈ້ງ, ມີສະຕິ ກໍຄືເປັນຫຼັກການໃນການເຄື່ອນໄຫວຂອງການນຳພາ, ຄຸ້ມຄອງຖືເປັນມາດຕາການໜຶ່ງທີ່ສຳຄັນ ໃນການຕີລາຄາຄວາມຮູ້, ຄວາມສາມາດ ແລະ ຄວາມຮັບຜິດຊອບການເມືອງ ໂດຍຖືເປັນບັນຫາທີ່ຕ້ອງຕິດພັນກັບເນື້ອໃນດຳເນີນຊີວິດ, ການຕິຊົມຕົນເອງ ແລະ ຕິຊົມກັນຢູ່ພາຍໃນ ຢ່າງເລິກເຊິ່ງເຖິງຖອງ ຈຶ່ງເຮັດໃຫ້ການປັບປຸງລະບົບການເມືອງ, ການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານຂອງສະພາປະຊາຊົນຂັ້ນແຂວງ ມີຄວາມໜັກແໜ້ນ, ເຂັ້ມແຂງປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ກໍຄືແຂວງຄຳມ່ວນ ນັບມື້ກ້າວໜ້າຢ່າງບໍ່ຢຸດຢັ້ງ.

**(ເອື້ອ ມະໂນສິງ)**



# ທາບທາມຮ່າງກົດໝາຍ 11 ສະບັບ ທີ່ແຂວງເຊກອງ

(ສພຊ) ສະພາປະຊາຊົນແຂວງເຊກອງ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍຈຳນວນ 11 ສະບັບຂຶ້ນ ໃນວັນທີ 28 ເມສາຜ່ານມາ ໂດຍການເປັນປະທານຂອງທ່ານ ດົງເພັດ ພະຍົນ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳພັກແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16, ສະມາຊິກສະພາປະຊາຊົນແຂວງ ພ້ອມດ້ວຍພະແນກການ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.



ຮ່າງກົດໝາຍທີ່ນຳມາທາບທາມໃນຄັ້ງນີ້ ປະກອບມີ: ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການປົກຄອງ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການຈັດຫາງານ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍສາທາລະນະສຸກ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການຈັດພິມຈຳໜ່າຍ (ປັບປຸງ); ຮ່າງກົດໝາຍວ່າດ້ວຍສັດນ້ຳແລະການປະມົງ (ປັບປຸງ); ຮ່າງກົດໝາຍວ່າດ້ວຍສັດປ່າ (ປັບປຸງ); ຮ່າງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ປັບປຸງ); ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍສານທະຫານ (ປັບປຸງ). ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຄົ້ນຄວ້າປະກອບຄຳເຫັນຕໍ່ຮ່າງກົດໝາຍດັ່ງກ່າວ ແນໃສ່ເຮັດໃຫ້ເນື້ອໃນຄົບຖ້ວນ, ສົມບູນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ມີຄວາມຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງ, ສາມາດນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄດ້ໄຂຂຶ້ນໃນມໍ່ໆນີ້ ພ້ອມທັງຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຕົວຈິງ.



# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຢູ່ເມືອງໂພນໄຊ

(ສພຊ) ໃນວັນທີ 9 ພຶດສະພາ 2023 ທີ່ຫໍປະຊຸມໃຫຍ່ຂອງເມືອງໂພນໄຊແຂວງຫຼວງພະບາງ, ທ່ານ ວົງສະຫວັນ ເທບພະຈັນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ, ປະທານສະພາປະຊາຊົນແຂວງຫຼວງພະບາງ ພ້ອມດ້ວຍບັນດາສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ໄດ້ພົບປະຢ້ຽມຢາມ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງຫຼວງພະບາງ ຊຸດທີ II ຢູ່ເມືອງໂພນໄຊ ແຂວງຫຼວງພະບາງປະກອບມີ 1 ບ້ານ ແລະ ສຳນັກງານອົງການຂອງເມືອງ ຄື: ບ້ານຫ້ວຍງາ ມີ 55 ຄອບຄົວ, ພົນລະເມືອງ 281 ຄົນ ຍິງ 118 ຄົນ; ໃນນັ້ນ, ຢູ່ແຕ່ລະບ້ານມີຜູ້ເຂົ້າຮ່ວມອົງການປົກຄອງບ້ານທຸກຂະແໜງການ, ພໍ່ແມ່ປະຊາຊົນບັນດາເຜົ່າແຕ່ອາຍຸ 18 ປີຂຶ້ນໄປຢ່າງພ້ອມພຽງ; ສຳລັບການເຄື່ອນໄຫວພົບປະໂອ້ລົມຢູ່ສຳນັກງານອົງການຂອງເມືອງໂພນໄຊ ເຂົ້າຮ່ວມຮັບຟັງມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ອະດີດການນຳຂອງເມືອງ, ນາຍ ແລະ ພົນທະຫານ-ຕຳຫຼວດ ຕະຫຼອດຮອດພະນັກງານ-ລັດຖະກອນຂອງແຕ່ລະຫ້ອງການພາຍໃນເມືອງຢ່າງພ້ອມພຽງ.



ໃນໂອກາດນີ້, ໄດ້ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງ ຊຸດທີ II ເຊິ່ງເນື້ອໃນເອກະສານທີ່ນຳມາເຜີຍແຜ່ມີມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງແຂວງ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງແຂວງ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານອົງການກວດສອບປະຈຳພາກເໜືອ ແລະ ອົງການກວດກາລັດແຂວງປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງແຂວງ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງອົງການໄອຍະການປະຊາຊົນແຂວງ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສານປະຊາຊົນແຂວງ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງສະພາປະຊາຊົນແຂວງ; ພ້ອມນັ້ນ, ປະຊາຊົນຍັງໄດ້ສະເໜີຂໍ້ຫຍຸ້ງຍາກຕ່າງໆ ແລະ ສະພາປະຊາຊົນແຂວງຈະນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂຕາມຄວາມຖືກຕ້ອງເໝາະສົມ.

**(ສີວອນ)**



# ຜົນສຳເລັດຫຼາຍດ້ານຂອງສະພາປະຊາຊົນແຂວງໄຊສົມບູນ

ໄລຍະນີ້ ເປັນໄລຍະທີ່ພວມກະກຽມໃຫ້ແກ່ການຈັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງສະແດງໃຫ້ເຫັນວ່າ ສະພາຊຸດທີ IX ພວກເຮົາເດີນມາໃກ້ເຖິງເຄິ່ງທາງ ສະນັ້ນ, ຜູ້ຂຽນຈະພາບັນດາທ່ານຜູ້ອ່ານມາເບິ່ງຄືນບາງບົດສຳພາດ ໃນໄລຍະກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ດັ່ງຕໍ່ໄປນີ້:

ທ່ານ ແດງ ປະທຸມທອງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ໄດ້ໃຫ້ສຳພາດໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍທ່ານໄດ້ຕາງໜ້າສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ກໍຄືສະພາປະຊາຊົນແຂວງໄຊສົມບູນ ແຈ້ງໃຫ້ສື່ມວນຊົນ ກໍຄືສັງຄົມຊາບວ່າ ໃນໄລຍະ 6 ເດືອນ ກ່ອນຈະເຖິງກອງປະຊຸມສະໄໝສາມັນເທື່ອທີ 4 ສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ສາມາດປະຕິບັດພາລະບົດບາດສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ມີຜົນສຳເລັດອັນພົ້ນເດັ່ນຫຼາຍດ້ານຄື:

**ດ້ານນິຕິບັນຍັດ:** ໄດ້ຍົກສູງສິດພາລະບົດບາດຄວາມຮັບຜິດຊອບຂອງຕົນ, ສຸມສະຕິປັນຍາ ໃນການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຕໍ່ຫຼາຍບັນຫາສຳຄັນ ທີ່ສະພາແຫ່ງຊາດນຳມາພິຈາລະນາຄົ້ນຄວ້າໃນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ສະໄໝສາມັນຂອງສະພາປະຊາຊົນແຂວງໄຊສົມບູນ ເຊິ່ງໄດ້ມີການພິຈາລະນາຮັບຮອງ ແລະ ອອກເປັນຈຳນວນ 20 ມະຕິ ໃນນັ້ນ, ປະກອບມີມະຕິຮັບຮອງເອົາກົດໝາຍ 9 ມະຕິ ແລະ ສຳເລັດການທາບທາມຮ່າງກົດໝາຍ ຈຳນວນ 13 ສະບັບ, ສຳເລັດການພິຈາລະນາຮັບຮອງນິຕິກຳໃຕ້ກົດໝາຍທີ່ເປັນບ່ອນອີງໃນການເຄື່ອນໄຫວວຽກງານຢູ່ຂັ້ນທ້ອງຖິ່ນ ໄດ້ 2 ສະບັບ ຄື: ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນພະນັກງານບຳນານ ແລະ ຜູ້ສູງອາຍຸ ແລະ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍລະບຽບການ ແລະ ກົນໄກເຮັດວຽກຂອງອົງການປົກຄອງແຂວງໄຊສົມບູນ ຊຸດທີ I.



ນອກນັ້ນ, ຍັງໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ແລະ ຂອງສະພາປະຊາຊົນແຂວງ ໃຫ້ກັບປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ລວມທັງໝົດ 2.989 ຄົນ ຍິງ 1.058 ຄົນ; ນອກຈາກນີ້, ກໍຍັງໄດ້ຕອບບັນຫາຂໍ້ຂ້ອງໃຈ ຂອງປະຊາຊົນລາວບັນດາເຜົ່າ ຈຳນວນ 126 ບັນຫາ ແລະ ອີກຈຳນວນໜຶ່ງ ແມ່ນໄດ້ສະເໜີຕໍ່ການນຳຂອງທ້ອງຖິ່ນ ແລະ ການນຳຂອງສະພາແຫ່ງຊາດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.



**ດ້ານການຕົກລົງບັນຫາສຳຄັນຂອງຊາດ:** ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ຄົ້ນຄວ້າພິຈາລະນາ ແລະ ປະກອບຄຳເຫັນໃນກອງປະຊຸມສະພາແຫ່ງຊາດທັງໝົດ 19 ບັນຫາ ກວມລວມເອົາຫຼາຍຂົງເຂດວຽກງານ ເຊັ່ນ: ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ບັນຫາຢາເສບຕິດ, ບັນຫາຄູເຫຼືອບໍ່ພໍ, ການຊຸກຍູ້ສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ແລະ ການຈັດຕັ້ງປະຕິບັດດຳລັດ 141/ລບ ຂອງລັດຖະບານ ເປັນຕົ້ນ. ບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແມ່ນເປັນການຍົກໃຫ້ເຫັນສະພາບການລວມຂອງຊາດ ແລະ ສະພາບການຢູ່ທ້ອງຖິ່ນຂອງຕົນ ພ້ອມທັງສະເໜີວິທີການປັບປຸງແກ້ໄຂໃນຕໍ່ໜ້າ ເຊິ່ງຄຳເຫັນເຫຼົ່ານັ້ນໄດ້ເປັນຂໍ້ມູນໃຫ້ແກ່ລັດຖະບານໃນການດັດປັບແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ລະອຽດ, ສອດຄ່ອງກັບສະພາບຕົວຈິງຍິ່ງຂຶ້ນຕື່ມ.

**ດ້ານການຕິດຕາມກວດກາ:** ຕະຫຼອດໄລຍະຜ່ານມາ ໄດ້ເອົາໃຈໃສ່ຕໍ່ວຽກງານການຕິດຕາມກວດກາ ເຊັ່ນ: ການເຂົ້າຮ່ວມກອງປະຊຸມຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ, ບັນດາກະຊວງ ແລະ ອົງການປົກຄອງແຂວງ, ຕິດຕາມກວດກາດ້ານເອກະສານຂອງລັດຖະບານ, ບັນດາກະຊວງ, ອົງການປົກຄອງແຂວງ ແລະ ພະແນກການທີ່ກ່ຽວຂ້ອງຢ່າງໃກ້ຊິດ; ຕິດຕາມກວດກາວຽກງານ 6 ເດືອນທ້າຍປີ 2022 ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການຈັດຕັ້ງປະຕິບັດກົດໝາຍທີ່ຕິດພັນກັບຂົງເຂດເສດຖະກິດ ແລະ ຕາມມະຕິ 03/ສພຊ ລວມທັງໝົດ 7 ໂຄງການຂອງ 6 ບໍລິສັດ; ນອກຈາກນີ້, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ຕິດຕາມກວດກາບັນດາຜົນກະທົບ, ບັນຫາທາງສັງຄົມ ພ້ອມທັງໃຫ້ຄຳປຶກສາດ້ານກົດໝາຍ, ຮັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໄດ້ທັງໝົດ ຈຳນວນ 9 ເລື່ອງ ແກ້ໄຂແລ້ວ 8 ເລື່ອງ ກຳລັງຄົ້ນຄວ້າ 1 ເລື່ອງ.

ທ່ານ ແດງ ປະທຸມທອງ ໃຫ້ຮູ້ຕື່ມວ່າ: ຜ່ານການພົບປະຜູ້ມີສິດເລືອກຕັ້ງ ໄດ້ສະເໜີໃຫ້ລັດຖະບານ ກໍຄືອົງການປົກຄອງແຂວງຊ່ວຍແກ້ໄຂ 7 ບັນຫາຕົ້ນຕໍ ກ່ຽວກັບບັນຫາຢາເສບຕິດ, ຂີ້ລັກງັດແງະ ແລະ ບັນຫາການດັດສ້າງຜູ້ຕິດຢາເສບຕິດທີ່ໄດ້ຮັບການປ່ອຍຕົວ ແຕ່ຍັງບໍ່ສາມາດຢຸດເຊົາການຢາເສບໄດ້ຢ່າງຖາວອນ; ໂຮງຮຽນ ແລະ ສຸກສາລາ, ຂອງບັນດາບ້ານຈຸດສຸມຕ່າງໆ ເຊິ່ງບາງບ້ານຍັງບໍ່ທັນມີ ແລະ ຈຳນວນທີ່ມີກໍຍັງບໍ່ທັນພຽງພໍກັບຄວາມຮຽກຮ້ອງຕ້ອງການ; ບັນຫາລູກຫຼານທີ່ຮຽນຈົບມາແລ້ວ ບໍ່ມີວຽກເຮັດງານທຳ; ການກໍ່ສ້າງຖະໜົນຫົນທາງ, ໄຟຟ້າ, ນ້ຳປະປາ, ນ້ຳລິນ, ນ້ຳສະອາດໃຊ້ ຍັງບໍ່ທັນສະດວກ ແລະ ບໍ່ພຽງພໍ; ບັນຫາລາຄາຜົນຜະລິດກະສິກຳຕົກຕ່ຳ ແລະ ບັນຫາການຂາດແຄນວິຊາການຊ່ວຍຊຸກຍູ້ການຜະລິດໃນຂະແໜງການຕ່າງໆ; ບັນຫາການແບ່ງດິນແບ່ງປ່າ ກຳນົດເຂດດິນທຳການຜະລິດ, ປ່າຊົມໃຊ້ ແລະ ປ່າຫວງຫ້າມ ຍັງບໍ່ຈະແຈ້ງ ປະຊາຊົນຍັງບຸກລຸກຖາງປ່າຈຳນວນຫຼາຍ. ບັນຫາເງິນເຟີ້, ນ້ຳມັນເຊື້ອໄຟ ຄ່າຄອງຊີບສູງ ແລະ ອື່ນໆ.

ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການພັດທະນາຕາມຄວາມຕ້ອງການຂອງປະຊາຊົນນັ້ນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ກໍຄືສະພາປະຊາຊົນແຂວງໄຊສົມບູນ ຕ້ອງໄດ້ພະຍາຍາມກະຕຸກຊຸກຍູ້ໃຫ້ລັດຖະບານ ກໍຄືອົງການປົກຄອງແຂວງ ໂດຍການຄົ້ນຄວ້າ, ພິຈາລະນາ, ປະກອບຄຳເຫັນ ແລະ ຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງຊາດ ແລະ ຂອງແຂວງ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ຖືກເປົ້າໝາຍ ກໍຄືການເຮັດໃຫ້ເສດຖະກິດ-ສັງຄົມ ແລະ ບັນຫາພື້ນຖານໂຄງລ່າງໄດ້ຮັບການປັບປຸງແກ້ໄຂ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນເທື່ອລະກ້າວ.

ຜ່ານໄປນັ້ນ ແມ່ນຜົນງານໃນການຈັດຕັ້ງປະຕິບັດ 3 ພາລະບົດບາດຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ໃນໄລຍະ 6 ເດືອນ ກ່ອນຈະເຖິງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ນັບຖອຍຫຼັງອີກບໍ່ເທົ່າໃດວັນຂ້າງໜ້າ ພວກເຮົາຈະພາບັນດາທ່ານຜູ້ອ່ານໄດ້ຮູ້ຈັກກັບຜົນງານອັນພົ້ນເດັ່ນຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ຈະມານຳສະເໜີໃນໄລຍະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຈະມີຫຍັງແດ່ນັ້ນ ເຮົາຕິດຕາມໄປພ້ອມໆກັນ.



## ສະຫຼຸບວຽກງານຂອງຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ



(ສພຊ) ໃນວັນທີ 8 ພຶດສະພາຜ່ານມາ, ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ປະຈຳງວດ I ປີ 2023 ແລະ ແຜນການປະຈຳງວດ II ປີ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໂດຍການເປັນປະທານຂອງທ່ານ ສາຍສະໜອນ ອິນທິເສນ ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ; ເຂົ້າຮ່ວມມີທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານສະພາປະຊາຊົນແຂວງ, ຜູ້ຊີ້ນຳຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ, ມີຄະນະກຳມະການ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳງວດ I ແລະ ແຜນການເຄື່ອນໄຫວ ປະຈຳງວດ II ຂອງຄະນະກຳມະການດັ່ງກ່າວ. ພ້ອມນັ້ນ, ບັນດາທ່ານທີ່ເຂົ້າຮ່ວມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບ ເພື່ອເຮັດໃຫ້ເນື້ອໃນໃຫ້ຄົບຖ້ວນສົມບູນ, ຮັດກຸມ, ຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງ.

ກອງປະຊຸມຄັ້ງນີ້, ທ່ານ ຂັນໄຊ ລັດຖະເຮົ້າ ໄດ້ມີຄຳເຫັນວ່າ: ໃນໄລຍະຜ່ານມາຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ໄດ້ເຄື່ອນໄຫວວຽກງານມີຜົນສຳເລັດຫຼາຍດ້ານ; ພ້ອມດຽວກັນນັ້ນ, ກໍຍັງມີບາງຈຸດທີ່ຈະຕ້ອງໄດ້ປັບປຸງແກ້ໄຂ ໂດຍສະແດງອອກໃນບົດສະຫຼຸບແລ້ວ; ຜົນຂອງກອງປະຊຸມຄັ້ງນີ້ ສາມາດຕີລາຄາລວມພາຍໃນຄະນະກຳມະການ ແລະ ເປັນການຕີລາຄາໃນການປະສານງານພົວພັນລະຫວ່າງຄະນະກຳມະການ ແລະຄະນະເລຂາທິການພາຍໃນສະພາປະຊາຊົນແຂວງ ທີ່ຈະຕ້ອງໄດ້ປັບປຸງແກ້ໄຂຮ່ວມກັນໃຫ້ມີຄວາມຄ່ອງຕົວຫຼາຍຂຶ້ນ; ຕໍ່ກັບແຜນການເຄື່ອນໄຫວຕໍ່ໜ້າ ສະເໜີໃຫ້ຄະນະກຳມະການຊຸກຍູ້ໃນການສ້າງຮ່າງນິຕິກຳໃຕ້ກົດໝາຍໃນຂົງເຂດຕົນ ຕ້ອງໃຫ້ຄົບຖ້ວນທັນກັບກຳນົດເວລາ; ເປັນເຈົ້າໃນການເປັນເສນາທິການຊຸກຍູ້ຕາມຂະບວນການບາດກ້າວຂັ້ນຕອນໃນການພິຈະລະນາຮັບຮອງເອົາບັນຫາສຳຄັນຂອງແຂວງ ແລະ ຕິດຕາມກວດກາ ໂດຍຜ່ານຫຼາຍຮູບການ ເຊັ່ນ: ຕິດຕາມກວດກາຕາມມະຕິກອງປະຊຸມສະພາປະຊາຊົນແຂວງ, ບັນຫາເຄັ່ງຮ້ອນທີ່ເປັນຜົນກະທົບຕໍ່ສັງຄົມ ດ້ວຍຄວາມຮັບຜິດຊອບສູງໃຫ້ມີຜົນສຳເລັດ; ສືບຕໍ່ສົມທົບແໜ້ນ ແລະ ແລກປ່ຽນບົດຮຽນຮ່ວມກັນທັງພາຍໃນ ແລະ ພາຍນອກ ເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານບັນລຸຕາມຄາດໝາຍທີ່ວາງໄວ້.

**(ນາງ ຄັດສອນ ຮຸ່ງສະຫວ່າງ)**

## ສພຂ ຫົວພັນ ທາບທາມຮ່າງກົດໝາຍ 11 ສະບັບ



(ສພຊ) ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະສະມາຊິກສະພາແຫ່ງຊາດ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2015 ແລະ ປະຕິບັດຕາມແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ ສະບັບເລກທີ 160/ຄລສ.ກກໝ, ລົງວັນທີ 25 ເມສາ 2023; ຄຳແນະນຳຂອງກຳມາທິການກົດໝາຍ ສະພາແຫ່ງຊາດ ສະບັບເລກທີ 123/ກກໝ, ລົງວັນທີ 21 ເມສາ 2023 ກ່ຽວກັບການຈັດຕັ້ງທາບທາມຄຳຫັນຕໍ່ຮ່າງກົດໝາຍ ຈຳນວນ 11 ສະບັບ ທີ່ຈະນຳເຂົ້າພິຈາລະນາ,ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX.

ໃນວັນທີ 2-3 ພຶດສະພາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 11 ສະບັບ ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານ ສພຂ ຫົວພັນ; ເຂົ້າຮ່ວມໂດຍທ່ານ ພຸດພັນ ແກ້ວວົງໄຊ ຮອງເຈົ້າແຂວງຫົວພັນ ຜູ້ຊີ້ນຳວຽກງານຂົງເຂດກົດໝາຍ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງຫົວພັນ; ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8, ສະມາຊິກສະພາປະຊາຊົນແຂວງຫົວພັນ, ກຳມະການພັກແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ແນວລາວສ້າງຊາດແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ບັນດາສາຂາທະນາຄານ ຕະຫຼອດຮອດພະນັກງານວິຊາການ ທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານຕໍ່ກັບການສ້າງ ແລະ ປັບປຸງຮ່າງກົດໝາຍຈຳນວນ 11 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ (ສ້າງໃໝ່); ກົດໝາຍວ່າດ້ວຍການປົກຄອງ (ສ້າງໃໝ່); ກົດໝາຍວ່າດ້ວຍການຈັດຫາງານ (ສ້າງໃໝ່); ກົດໝາຍວ່າດ້ວຍອາກອນທີ່ດິນ (ສ້າງໃໝ່); ກົດໝາຍວ່າດ້ວຍວຽກງານສາທາລະນະສຸກ (ສ້າງໃໝ່); ກົດໝາຍວ່າດ້ວຍການພິມຈຳໜ່າຍ (ປັບປຸງ); ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ປັບປຸງ);ກົດໝາຍວ່າດ້ວຍທະນາຄານທຸລະກິດ (ປັບປຸງ); ກົດໝາຍວ່າດ້ວຍສານທະຫານ (ປັບປຸງ); ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ (ປັບປຸງ) ແລະ ກົດໝາຍວ່າດ້ວຍສັດປ່າ (ປັບປຸງ).

ໂອກາດດັ່ງກ່າວ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມເພີ່ມຕື່ມບາງມາດຕາຂອງກົດໝາຍທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນຕິດພັນກັບຂະແໜງການໂດຍກົງ; ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ພ້ອມກັນປະກອບຄຳຄິດຄຳເຫັນໃສ່ບັນດາຮ່າງກົດໝາຍເປັນຕົ້ນແມ່ນເຫດຜົນ ແລະ ຄວາມຈຳເປັນໃນການສ້າງ ແລະ ປັບປຸງກົດໝາຍ ລວມທັງໂຄງສ້າງຂອງກົດໝາຍສ້າງໃໝ່ຢ່າງກົງໄປກົງມາໂດຍສະເພາະໄດ້ສຸມໃສ່ບາງໝວດ, ບາງມາດຕາທີ່ເຫັນວ່າຍັງບໍ່ທັນສອດຄ່ອງເໝາະສົມກັບສະພາບຄວາມເປັນຈິງ.

ຕອນທ້າຍ, ປະທານກອງປະຊຸມໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນເອົາໃຈໃສ່ສຸມສະຕິປັນຍາ, ຍົກສູງຄວາມຮັບຜິດຊອບຂອງຕົນເຂົ້າໃນການຄົ້ນຄວ້າປະກອບຄຳຄິດ, ຄຳເຫັນໃສ່ເນື້ອໃນຮ່າງກົດໝາຍຈຳນວນ 11 ສະບັບ ຄັ້ງນີ້ສຳເລັດຕາມແຜນການທີ່ວາງໄວ້.

**(ນາງ ປຸ້ຍນິຕາ ເພັງມີໄຊ)**



## ຝຶກອົບຮົມຍົກສູງຄວາມສາມາດໃຫ້ແກ່ ສພຂ

(ສພຊ) ໃນວັນທີ 10-12 ພຶດສະພາ 2023 ສະພາປະຊາຊົນແຂວງຫຼວງພະບາງ ໄດ້ຈັດຊຸດຝຶກອົບຮົມຍົກສູງຄວາມສາມາດໃນການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ, ການຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການຄຸ້ມຄອງໂຄງການລົງທຶນຂອງລັດ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍສະພາປະຊາຊົນແຂວງທີ່ເມືອງນານ ແຂວງຫຼວງພະບາງ ໂດຍການເປັນປະທານຂອງທ່ານ ວົງສະຫວັນ ເທບພະຈັນ ປະທານສະພາປະຊາຊົນແຂວງ, ມີຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກ, ພະນັກງານສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກ 6 ເມືອງໃຕ້



ຄື: ປາກແຊງ, ໂພນໄຊ, ປາກອູ, ຊຽງເງິນ, ພູຄູນ ແລະ ເມືອງນານ.

ກອງປະຊຸມໄດ້ຮັບຟັງການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ; ພາລະບົດບາດ ສິດ ແລະ ໜ້າທີ່ຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ; ຂັ້ນຕອນການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ; ການສຶກສາທາງດ້ານກົດໝາຍ ໃນຮູບແບບຄຼີນິກກົດໝາຍ Clinical Legal Education ຫຼື (CLE); ການສ້າງແຜນງົບປະມານ ແລະ ການເກັບລາຍຮັບ-ຄຸ້ມຄອງລາຍຈ່າຍ; ວິທີການສ້າງແຜນບົດໂຄງການ ແລະ ການປະເມີນໂຄງການລົງທຶນຂອງລັດ; ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ, ການຊັກຖາມ ແລະ ການພົບປະຜູ້ມີສິດເລືອກຕັ້ງຂອງສະມາຊິກສະພາປະຊາຊົນແຂວງ; ຂັ້ນຕອນ ແລະ ວິທີການຄົ້ນຄວ້າຄຳຮ້ອງທຸກຂອງສະມາຊິກສະພາປະຊາຊົນແຂວງປະຈຳເມືອງ-ນະຄອນ ແລະ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ; ການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນທຶນຈາກແຜນງານການມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໄລຍະ II (CEGGA II).

**(ວິລິຍະ ວັນນະສີ)**






# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ

4. ອະນຸຍາດ, ໂຈະ ຫຼື ຍຸບເລີກ ກ່ຽວກັບການໃຫ້ບໍລິການເງິນຕາຕ່າງປະເທດ ພ້ອມທັງຕິດຕາມກວດກາຫົວໜ່ວຍດັ່ງກ່າວ;

5. ພິຈາລະນາການເປີດບັນຊີເງິນຝາກຢູ່ຕ່າງປະເທດ, ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າກັບຕ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ຄຸ້ມຄອງ ແລະ ຕິດຕາມກວດກາ ກະແສເງິນຕາ ທີ່ຕິດພັນກັບການຂຸດຄົ້ນ, ການຊື້ຂາຍ ແລະ ການແລກປ່ຽນຊັບສິນດິຈິຕອນ;

7. ສ້າງ, ບຳລຸງ, ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ກ່ຽວກັບວຽກງານເງິນຕາຕ່າງປະເທດໃຫ້ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຂອງຕົນ;

8. ພັດທະນາ ແລະ ນຳໃຊ້ລະບົບ ຂໍ້ມູນຂ່າວສານທີ່ທັນສະໄໝ, ສຳຫຼວດ, ເກັບກຳ, ວິເຄາະ, ປະເມີນ ແລະ ສັງລວມຂໍ້ມູນໃນການຄຸ້ມຄອງເງິນຕາຕ່າງປະເທດຢ່າງເປັນລະບົບ;

9. ນຳໃຊ້ມາດຕະການທາງບໍລິຫານຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານເງິນຕາຕ່າງປະເທດ;

10. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ແຜນການກ່ຽວກັບວຽກງານເງິນຕາຕ່າງປະເທດ;

11. ພົວພັນຮ່ວມມືກັບຕ່າງປະເທດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານເງິນຕາຕ່າງປະເທດ;

12. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຄຸ້ມຄອງວຽກງານເງິນຕາຕ່າງປະເທດໃຫ້ລັດຖະບານຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ຂອງບັນດາ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ໂຄສະນາເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ; ປູກຈິດສຳນຶກໃຫ້ແກ່ສັງຄົມ ໃນການນຳໃຊ້ເງິນຕາໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ນຳໃຊ້ມາດຕະການທາງບໍລິຫານ ຕໍ່ວິສາຫະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ທີ່ລະເມີດກົດໝາຍສະບັບນີ້ ຕາມພາລະບົດບາດຂອງຕົນ. ນອກຈາກນີ້ ຍັງມີສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

1. ກະຊວງການເງິນ ມີສິດ ແລະ ໜ້າທີ່ ຕິດຕາມກວດກາການນຳເງິນຕາເປັນເງິນສົດເຂົ້າ-ອອກ ສປປ ລາວ, ສະໜອງແຜນການກູ້ຢືມ, ແຜນການຊຳລະໜີ້ສິນ ແລະ ການຄ້ຳປະກັນເງິນກູ້ກັບຕ່າງປະເທດ ໃຫ້ທະນາຄານແຫ່ງ ສປປ ລາວ ພ້ອມທັງສົມທົບກັບທະນາຄານແຫ່ງ ສປປ ລາວ ໃນການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດຄຸ້ມຄອງການກູ້ຢືມ ແລະ ໜີ້ສິນຕ່າງປະເທດ; ຕິດຕາມກວດກາການນຳເຂົ້າ-ສົ່ງອອກສິນຄ້າ ໃຫ້ສອດຄ່ອງຕາມຄວາມເປັນຈິງ ແລະ ແລກປ່ຽນຂໍ້ມູນກັບທະນາຄານແຫ່ງ ສປປ ລາວ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການຈັດຕັ້ງປະຕິບັດແຜນງົບປະມານ; ນຳໃຊ້ມາດຕະການຕໍ່ຜູ້ລະເມີດທີ່ນຳເງິນຕາເປັນເງິນສົດເຂົ້າ-ອອກ ສປປ ລາວ ເກີນມູນຄ່າທີ່ກຳນົດໂດຍບໍ່ໄດ້ແຈ້ງ ແລະ/ຫຼື ບໍ່ໄດ້ຮັບອະນຸຍາດ;

2. ກະຊວງແຜນການ ແລະ ການລົງທຶນ ມີສິດ ແລະ ໜ້າທີ່ໃນການຄຸ້ມຄອງລວມສູນ ແລະ ຊຸກຍູ້ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການວິເຄາະກ່ຽວກັບທຶນທີ່ຈະລົງທຶນ ຢູ່ ສປປ ລາວ, ຕິດຕາມກວດກາການນຳທຶນເຂົ້າ-ອອກ ສປປ ລາວ ຂອງຜູ້ລົງທຶນຕ່າງປະເທດ ແລະ ຜູ້ລົງທຶນ ຢູ່ເຂດເສດຖະກິດພິເສດ; ຕິດຕາມກວດກາການຊ່ວຍເຫຼືອລ້າ ແລ້ວສະໜອງຂໍ້ມູນໃຫ້ທະນາຄານແຫ່ງ ສປປ ລາວ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດ; ປະຕິບັດມາດຕະການຕໍ່ຜູ້ລະເມີດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

3. ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ໃນຕິດຕາມກວດກາການກຳນົດ ແລະ ຕິດລາຄາ, ການໂຄສະນາ, ຊຳລະ ແລະ ຮັບຊຳລະຄ່າສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນລວມທັງການກຳນົດໂຄງສ້າງລາຄາໃຫ້ເປັນເງິນກີບ; ພັດທະນາເຄື່ອງມືການຄຸ້ມຄອງລວມສູນກ່ຽວກັບຫົວໜ່ວຍວິສາຫະກິດນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ພ້ອມທັງຊຸກຍູ້ຫົວໜ່ວຍວິສາຫະກິດດັ່ງກ່າວໃນການເປີດບັນຊີເງິນຝາກສະເພາະ; ສະໜອງຂໍ້ມູນເງິນຕາຕ່າງປະເທດຕິດພັນກັບການນຳເຂົ້າ-ສົ່ງອອກສິນຄ້າ, ຂໍ້ມູນທະບຽນວິສາຫະກິດ, ການນຳເຂົ້າທຶນທີ່ເປັນເງິນຕາຕ່າງປະເທດ ຂອງຫົວໜ່ວຍວິສາຫະກິດ ໃຫ້ທະນາຄານແຫ່ງ ສປປ ລາວ; ນຳໃຊ້ມາດຕະການຕໍ່ຜູ້ລະເມີດທີ່ກຳນົດ ແລະ ຕິດລາຄາ, ການໂຄສະນາ, ຊຳລະ ແລະ ຮັບຊຳລະ ຄ່າສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນເປັນເງິນຕາຕ່າງປະເທດ ລວມທັງໂຈະການອະນຸຍາດການນຳເຂົ້າ-ສົ່ງອອກຊົ່ວຄາວ ໃນກໍລະນີທີ່ຜູ້ນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ ປະຕິບັດບໍ່ສອດຄ່ອງກັບກົດໝາຍສະບັບນີ້;

4. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ່ຕິດຕາມການກຳນົດ, ການໂຄສະນາ ເງິນເດືອນ ຫຼື ຄ່າແຮງງານໃຫ້ສອດຄ່ອງກັບກົດໝາຍສະບັບນີ້; ຊຸກຍູ້ແຮງງານໃຫ້ໂອນເງິນເຂົ້າ-ອອກ ສປປ ລາວ ຜ່ານຜູ້ໃຫ້ບໍລິການຊຳລະ ແລະ ສະໜອງຂໍ້ມູນ ກ່ຽວກັບຜູ້ອອກແຮງງານ ໃຫ້ທະນາຄານແຫ່ງ ສປປ ລາວ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດ;

5. ກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ປະຕິບັດມາດຕະການຕໍ່ຜູ້ນຳໃຊ້, ແລກປ່ຽນເງິນຕາ, ນຳເງິນຕາເປັນເງິນສົດເຂົ້າ-ອອກ ສປປລາວ ແລະ ໃຫ້ບໍລິການເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ສອດຄ່ອງກັບກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

6. ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງອື່ນ ມີສິດ ແລະ ໜ້າທີ່ໃນການຊຸກຍູ້ ແລະ ຕິດຕາມກວດກາ ການນຳລາຍຮັບຈາກການສົ່ງອອກ ສິນຄ້າ ແລະ ການບໍລິການເຂົ້າ ສປປ ລາວ, ການນຳທຶນເຂົ້າ-ອອກ ສປປ ລາວ, ການຖອກ ແລະ ນຳໃຊ້ທຶນຈົດທະບຽນ ແລະ ທຶນທັງໝົດຂອງວິສາຫະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

7. ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ສະໜອງຂໍ້ມູນ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານຄຸ້ມຄອງເງິນຕາຕ່າງປະເທດຕາມພາລະບົດບາດຂອງຕົນ._

**ໝວດທີ 2**

**ການກວດກາວຽກງານເງິນຕາຕ່າງປະເທດ**

**ມາດຕາ 49 (ປັບປຸງ) ອົງການກວດກາວຽກງານເງິນຕາຕ່າງປະເທດ**

ອົງການກວດກາວຽກງານເງິນຕາຕ່າງປະເທດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ເຊິ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ເຊິ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສື່ມວນຊົນ.

ອ່ານຕໍ່ສະບັບໜ້າ




## ວິທີເຮັດວຽກ

**ພາກທີ 3**

**ພະຍາດເປັນແຕ່ປາກ (ຕໍ່)**

3. ເວລາຂຽນ ເວລາເວົ້າ ຕ້ອງເຮັດແນວໃດໃຫ້ຜູ້ໃດກໍເຂົ້າໃຈໄດ້ສະເໝີ ເຮັດແນວໃດໃຫ້ປະຊາຊົນເຂົ້າໃຈຄືກັນ ເຊື່ອຖືຄືກັນ ແລະ ຕັດສິນໃຈເຮັດຕາມຄວາມຮຽກຮ້ອງຂອງເຮົາຄືກັນໝົດທຸກຄົນ ເວລາໃດກໍຕ້ອງຖາມຕົນເອງວ່າ: ເຮົາຂຽນໃຫ້ໃຜອ່ານ ເວົ້າໃຫ້ໃຜຟັງ? ຄວາມເວົ້າຂອງເຮົາ ແລະ ວິທີຂຽນຂອງເຮົາ ຕ້ອງຄັກໃຈວ່າຜູ້ທີ່ຈະຟັງ ຫຼື ຈະອ່ານນັ້ນເຂົ້າໃຈໄດ້ແທ້.

4. ເມື່ອຍັງບໍ່ທັນກວດເບິ່ງ ບໍ່ທັນຄົ້ນຄວ້າເບິ່ງ ບໍ່ທັນເຂົ້າໃຈຄັກ ກໍຢ່າຟ້າວເວົ້າ ຢ່າຟ້າວຂຽນແທ້ໆ.

5. ກ່ອນຈະເວົ້າ ຕ້ອງຄິດໃຫ້ຄັກໆເສຍກ່ອນ ຕ້ອງສັບຊ້ອນຈັດວາງຄຳຄິດ, ຄວາມເວົ້າໃຫ້ເປັນລະບອບຄັກແນ່ກ່ອນ. ຕ້ອງຈື່ສຸພາສິດທີ່ວ່າ ໃຫ້ປີ້ນລີ້ນ 7 ເທື່ອແລ້ວຈຶ່ງເວົ້າ.

ຫຼັງຈາກຂຽນແລ້ວ ກໍຕ້ອງກວດໄປກວດມາ 3-4 ເທື່ອ, ຖ້າວ່າແມ່ນເອກະສານສຳຄັນ ຍິ່ງຕ້ອງກວດໄປກວດມາຮອດ 9 ຫຼື 10 ເທື່ອ ແລ້ວຈຶ່ງເອົາອອກໃຊ້.

ຖ້າເຮັດໄດ້ແນວນັ້ນ ແມ່ນຈະແກ້ໄຂດັດແປງພະຍາດເປັນແຕ່ປາກນັ້ນໄດ້. ພະນັກງານ, ສະມາຊິກຂອງພັກເຮົາ ຕ້ອງເດັດດ່ຽວເຮັດໃຫ້ໄດ້ແນວນັ້ນ. ພະຍາດເປັນແຕ່ປາກຈຶ່ງຈະຄ່ອຍໆຫຼຸດໜ້ອຍລົງ ຈົນເຖິງໝົດສິ້ນໄປ ແລ້ວວຽກການຂອງພັກເຮົາ ຈຶ່ງຈະໄດ້ຮັບຜົນດີຍິ່ງຂຶ້ນ ແລະ ຄຸນສົມບັດຂອງພະນັກງານ ແລະ ສະມາຊິກຂອງພັກເຮົາ ຈຶ່ງຈະເພີ່ມທະວີຂຶ້ນສະເໝີ.

ອ່ານຕໍ່ສະບັບໜ້າ...

SCNG
SOMCHAYNEUK GROUP




# ໄລຍະຫ່າງລາຍຮັບ ຕ້ອງແກ້ດ້ວຍການເກັບພາສີ

# ທິດດີ

ຖືວ່າເປັນບັນຫາຂອງສັງຄົມໂລກທີ່ແກ້ບໍ່ຕົກມາຫຼາຍປີ. ອົງການ ອອກຟາມ ສາກົນ (Oxfam International) ເຊິ່ງເປັນອົງກອນພາກປະຊາສັງຄົມ ເຮັດໜ້າທີ່ດ້ານເສດຖະກິດໂດຍການກະຈາຍລາຍໄດ້; ໄດ້ນຳສະເໜີເອກະສານໃນເດືອນມັງກອນ 2023 ໃນຫົວຂໍ້: ທາງລອດຂອງອະພິມະຫາເສດຖີ =... "Survival of the Richest" ... ໂດຍລະບຸວ່າ: ຕ້ອງເກັບພາສີນຳພວກເຫຼືອກິນເຫຼືອໃຊ້.

ມີຂໍ້ສະຫຼຸບວ່າ: ນັບແຕ່ປີ 2020 ເປັນຕົ້ນມາ ຄົນ 1% ຂອງໂລກ ເປັນຜູ້ສ້າງຄວາມຮັ່ງມີກວມຈຳນວນ 2 ໃນ 3 ຂອງໂລກ. ສ່ວນ 1 ໃນ 3 ທີ່ເຫຼືອແມ່ນປະຊາກອນໂລກ 99% ໄດ້ຮັບ; ໝາຍຄວາມວ່າ ລະຫວ່າງກຸ່ມ 80 ລ້ານຄົນ ກັບ 7.920 ລ້ານຄົນ ມັນແຕກໂຕນກັນສໍ່າໃດ? ປີ 2022 ກຸ່ມທຸລະກິດອາຫານ ກັບ ພະລັງງານ ສ້າງກຳໄລຫຼາຍກວ່າປົກກະຕິ 2 ເທົ່າ ມີການຈ່າຍປັນຜົນໃຫ້ຜູ້ຖືຮຸ້ນເຖິງ 257.000 ລ້ານໂດລາ ໃນຂະນະທີ່ສິນຄ້າກຸ່ມນີ້ແພງຂຶ້ນໃນທົ່ວໂລກ, ມີຄົນປະມານ 800 ລ້ານຄົນທົ່ວໂລກ ຢູ່ໃນສະພາວະອຶດຫິວ. ສ່ວນກອງທຶນການເງິນລະຫວ່າງປະເທດ IMF ປະເມີນວ່າ: ປີ 2023 ເສດຖະກິດ 1 ໃນ 3 ຂອງປະເທດທົ່ວໂລກຈະຖົດຖອຍ; ໃນຂະນະທີ່ຄົນສ່ວນໃຫຍ່ໃນໂລກທຸກລົງ ແຕ່ມີຄົນກຸ່ມໜຶ່ງພັດຮັ່ງມີລົ້ນລອຍຂຶ້ນຢ່າງມະຫາສານ; ນັບແຕ່ປີ 2020 ເປັນຕົ້ນມາ ຄົນ 1% ຂອງໂລກ ສ້າງຄວາມລົ້ນລອຍກວມ 2 ໃນ 3 ຂອງໂລກໝາຍວ່າໃນສັດສ່ວນ 1% ກັບ 99% ຈະພົບວ່າ 99% ຂອງປະຊາກອນໂລກມີລາຍໄດ້ສະເລ່ຍມື້ໜຶ່ງ 1 ໂດລາ ແຕ່ກຸ່ມເສດຖີມີລາຍໄດ້ສະເລ່ຍເພີ່ມມື້ໜຶ່ງ 1,7 ລ້ານໂດລາ ຕໍ່ຄົນ. ໄລຍະຫ່າງນີ້ ຕ້ອງຖືກແກ້ໄຂດ້ວຍການເກັບພາສີເພີ່ມຂຶ້ນສຳລັບເສດຖີ ເຊັ່ນວ່າ: ເກັບພາສີຄົນຮັ່ງ (Wealth tax) 2% ຈາກເສດຖີເງິນລ້ານ (World's millionaires); 3% ຈາກພວກທີ່ມີເງິນຫຼາຍກວ່າ 50 ລ້ານ ແລະ 5% ຈາກພວກເສດຖີພັນລ້ານ ຫາກເກັບແບບນີ້ ຈະລະດົມເງິນໄດ້ເຖິງ 1,7 ລ້ານລ້ານໂດລາ ຕໍ່ປີ ເຊິ່ງພຽງພໍສຳລັບຊ່ວຍໃຫ້ຄົນປະມານ 2 ພັນລ້ານຄົນໃນໂລກຫຼຸດຈາກຄວາມອຶດຫິວ ແລະ ຍາກຈົນ.

ອົງການ Oxfam ກ່າວວ່າ: ສຳລັບຄົນຮັ່ງມີຂອງໂລກ 1% ນັ້ນ ຄວນເສຍພາສີ 60% ຂອງລາຍໄດ້ຈາກທຸກແຫຼ່ງ ເປັນຕົ້ນແມ່ນພາສີການຖືຄອງມໍລະດົກ; ອະສັງຫາລິມະຊັບ ແລະ ທີ່ດິນ. ການເກັບພາສີຄົນຮັ່ງມີນີ້ ຄວນເຮັດພ້ອມກັນໃນທຸກປະເທດ ເພື່ອຢຸດລະບົບເສດຖະກິດທີ່ເອື້ອປະໂຫຍດໃຫ້ຄົນຮັ່ງມີ ເຊິ່ງຖືວ່າແນວທາງເສດຖະກິດນີ້ຜິດພາດ ເພາະສ້າງໃຫ້ໄລຍະຫ່າງລະຫວ່າງເສດຖີກັບຄົນຈົນ ຫຍັບອອກຈາກກັນເລື້ອຍໆ. ຕາມຂໍ້ມູນນີ້ພໍສະຫຼຸບໄດ້ວ່າ: ອົງການ Oxfam ຢາກໃຫ້ມີການເກັບພາສີຄົນຮັ່ງມີໃຫ້ສູງຂຶ້ນ ເພື່ອກະຈາຍລົງມາສູ່ພາກປະຊາກອນໂລກທີ່ທຸກຈົນ ແລະ ອຶດຫິວ... ຄວາມຄິດນີ້ເປັນເລື່ອງດີ ແຕ່ພາກປະຕິບັດຕົວຈິງຍາກຫຼາຍ.

ປີ 2022 ທະນາຄານໂລກ (WB) ປະກາດຍອມຮັບວ່າບໍ່ສາມາດຫຼຸດຄວາມຍາກຈົນໄດ້ຕາມເປົ້າໝາຍ (extreme poverty) ໝາຍເຖິງໄລຍະຫ່າງລະຫວ່າງເສດຖີ ແລະ ຄົນຈົນ ນັບມື້ຫຍັບອອກຫ່າງໄກກັນ; ມີຫຼາຍປະເທດພວມຢູ່ໃນສະພາວະລົ້ມລະລາຍບໍ່ມີເງິນຈ່າຍໜີ້ສິນສາທາລະນະ; ໃນປະເທດຍາກຈົນ ງົບປະມານທີ່ນຳໄປໃຊ້ໜີ້ສູງກວ່າງົບສາທາລະນະສຸກ 4 ເທົ່າຕົວ. ປີ 2023 ເສດຖະກິດໂລກຍັງຕ້ອງປະເຊີນກັບຄວາມຫຍຸ້ງຍາກຫຼາຍຢ່າງຈາກວິກິດການພະລັງງານ; ອາຫານ ສືບເນື່ອງມາຈາກຂໍ້ຂັດແຍ່ງລະຫວ່າງປະເທດໃຫຍ່ໃນໂລກ. ທັງໝົດນັ້ນ ຄືການຄາດຄະເນີ!



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ອັກສອນສູງ | ອັກສອນຕ່ຳ |
|---|---|
| ຂ່າ : ຫົວຂ່າ | ຄ່າ : ຄຸນຄ່າ |
| ຂູ່ : ຂົ່ມຂູ່ | ຄູ່ : ຄູ່ | 
| ໄຂ່ : ໄຂ່ໄກ່ | ໄຄ່ : ຮັກໄຄ່ |
| ຂ່າງ : ໝາກຂ່າງ | ຄ່າງ : ໂຕຄ່າງ |
| ສ່ຽວ : ສ່ຽວສະຫາຍ | ຊ່ຽວ : ຊ່ຽວຊານ |
| ສ່າ : ສ່າເຫຼົ້າ | ຊ່າ : ຊ່າລື |
| ສີ່: ສີ່ສານ | ຊີ່ : ຊີ່ສຽງ |
| ສໍ່ : ສັບສໍ່ | ຊໍ່ : ຊໍ່ດອກໄມ້ |

# ວັນເດັກນ້ອຍ ໃນ 10 ປະເທດ AEC

ແປ ແລະ ຮຽບຮຽງໂດຍ: ບົງເອີນ



ເພາະ "ເດັກນ້ອຍ" ຄືອານາຄົດຂອງຊາດ ທີ່ຈະເລີນເຕີບໃຫຍ່ຂຶ້ນມາພັດທະນາປະເທດຊາດ ຜູ້ໃຫຍ່ຈຶ່ງໃຫ້ຄວາມສຳຄັນແກ່ເດັກນ້ອຍ ແລະ ຈັດໃຫ້ມີວັນເດັກນ້ອຍຂຶ້ນ ເພື່ອໃຫ້ເປັນວັນທີ່ແສນພິເສດໃຫ້ກັບເຂົາເຈົ້າໃນທຸກໆປີ ເຊິ່ງກິດຈະກຳທີ່ຈັດຂຶ້ນໃນວັນເດັກນ້ອຍຈະມີກິດຈະກຳທີ່ມ່ວນຊື່ນ, ອົບອຸ່ນ ແລະ ໄດ້ຄວາມຮູ້ ເພື່ອເຮັດໃຫ້ເຂົາເຈົ້າເຕີບໃຫຍ່ຂຶ້ນມາເປັນຜູ້ໃຫຍ່ແລະກຳລັງແຮງທີ່ສຳຄັນໃນການພັດທະນາປະເທດຊາດ.

ວັນເດັກນ້ອຍສາກົນໄດ້ຮັບການສ້າງຕັ້ງຂຶ້ນໂດຍສອງອົງການລະດັບໂລກຄື: Women's international Democratic Federation ໃນປີ 1950 ໂດຍໄດ້ກຳນົດເອົາວັນທີ 1 ມິຖຸນາຂອງທຸກໆປີ ເປັນວັນເດັກນ້ອຍສາກົນ ແລະ ອົງການສະຫະປະຊາຊາດ ກໍໄດ້ກຳນົດເອົາວັນທີ 20 ພະຈິກຂອງທຸກປີ ເປັນວັນເດັກນ້ອຍສາກົນ; ສຳລັບປະເທດລາວເຮົາກໍໃຫ້ຄວາມສຳຄັນໃນວັນເດັກນ້ອຍສາກົນເຊັ່ນດຽວກັນ ພ້ອມທັງຖືເອົາວັນທີ 1 ມິຖຸນາເປັນວັນປູກຕົ້ນໄມ້ແຫ່ງຊາດນຳອີກ ເພື່ອເປັນການປູກຈິດສຳນຶກໃຫ້ເດັກນ້ອຍຮູ້ຮັກທຳມະຊາດ ແລະ ເປັນການສ້າງກິດຈະກຳໃຫ້ວັນເດັກນ້ອຍໃຫ້ເຕັມໄປດ້ວຍຄວາມມ່ວນຊື່ນ; ນອກຈາກກິດຈະກຳປູກຕົ້ນໄມ້ແລ້ວ ໃນຫຼາຍໆໂຮງຮຽນ, ສະຖານທີ່ຕ່າງໆກໍໄດ້ມີກິດຈະກຳການສະແດງສິລະປະ, ການຮ້ອງເພງ, ການແຂ່ງຂັນກິລາ ແລະ ກິດຈະກຳອື່ນໆຕື່ມອີກ.

ສຳລັບບັນດາປະເທດໃນອາຊຽນ ເຖິງຈະຢູ່ໃນພາກພື້ນດຽວກັນ ແຕ່ຫຼາຍປະເທດມີວັດທະນະທຳທີ່ຄ້າຍຄືກັນ ແຕ່ວັນເດັກນ້ອຍຂອງແຕ່ລະປະເທດນັ້ນ ບໍ່ແມ່ນມື້ດຽວກັນໝົດທຸກປະເທດ; ສຳລັບປະເທດໄທ ເປັນປະເທດທຳອິດທີ່ຈັດງານວັນເດັກນ້ອຍສາກົນ ໂດຍກຳນົດເອົາວັນເສົາອາທິດທີ່ສອງຂອງເດືອນມັງກອນ, ປະເທດອິນໂດເນເຊຍ ກຳນົດເອົາວັນທີ 13 ກໍລະກົດ, ປະເທດສິງກະໂປ ກຳນົດເອົາວັນສຸກທຳອິດຂອງຕົ້ນເດືອນຕຸລາ, ປະເທດຟີລິປິນ ແລະ ບຣູໄນ ກຳນົດເອົາວັນທີ 20 ພະຈິກ ເຊິ່ງເປັນວັນເດັກນ້ອຍສາກົນທີ່ສະຫະປະຊາຊາດເປັນຜູ້ກຳນົດຂຶ້ນ ສ່ວນປະເທດລາວ ມຽນມາ ກຳປູເຈຍ ແລະ ຫວຽດນາມ ໄດ້ກຳນົດເອົາວັນທີ 1 ມິຖຸນາເປັນວັນເດັກນ້ອຍຂອງປະເທດຕົນ.

ວັນເດັກນ້ອຍຂອງແຕ່ລະປະເທດໃນອາຊຽນ ອາດຈະບໍ່ແມ່ນວັນດຽວກັນກໍຕາມ ແຕ່ທຸກປະເທດ ກໍມີກິດຈະກຳສຳລັບເດັກນ້ອຍເຊັ່ນດຽວກັນ ຈຸດປະສົງຫຼັກ ກໍເພື່ອເຮັດໃຫ້ເດັກນ້ອຍ ໄດ້ມີກິດຈະກຳຮ່ວມກັບຄອບຄົວ, ຄູອາຈານ ແລະ ໝູ່ເພື່ອນ; ໃນວັນເດັກນ້ອຍສາກົນຫຼາຍພາກສ່ວນໄດ້ມີການຈັດກິດຈະກຳຂຶ້ນ ບໍ່ວ່າຈະເປັນພາກສ່ວນລັດ ກໍຄືເອກະຊົນ ໂດຍບາງປະເທດໄດ້ມີກິດຈະກຳອື່ນເຂົ້າຮ່ວມນຳເຊັ່ນ: ປະເທດລາວ ນອກຈາກເປັນວັນເດັກນ້ອຍແລ້ວ ຍັງເປັນວັນປູກຕົ້ນໄມ້ແຫ່ງຊາດອີກດ້ວຍ.

ເຖິງວ່າກິດຈະກຳໃນວັນເດັກນ້ອຍສາກົນຂອງແຕ່ລະປະເທດ ຈະມີຄວາມແຕກຕ່າງກັນແດ່ເລັກນ້ອຍກໍຕາມ ແຕ່ຈຸດປະສົງຫຼັກຂອງການຈັດງານນັ້ນ ແມ່ນອັນດຽວກັນ ກໍຄືບໍ່ໃຫ້ຜູ້ໃຫຍ່ລືມຄວາມສຳຄັນຂອງເດັກນ້ອຍ ແລະ ໃຫ້ເດັກນ້ອຍເອງໄດ້ຮູ້ວ່າ ພວກເຂົາມີຄວາມສຳຄັນຫຼາຍພຽງໃດຕໍ່ກັບປະເທດຊາດ ລວມເຖິງການປູກຝັງຈິດສຳນຶກໃຫ້ເດັກນ້ອຍກາຍເປັນພົນລະເມືອງທີ່ດີຂອງຊາດ, ຮູ້ຈັກໜ້າທີ່ຕົນເອງຢູ່ໃນລະບຽບວິໄນ ມີຄວາມຍຶດໝັ້ນໃນສະຖາບັນຊາດ, ສາສະໜາ ແລະ ລະບົບການປົກຄອງຂອງປະເທດຕົນ.

**ຂໍ້ມູນຈາກ: www.tkpark.or.th/**



# ໂລກະບານທັງ 4

ໂລກະບານທັງ 4 ແມ່ນຜູ້ຄຸ້ມຄອງໂລກທັງ 4 ທິດໄດ້ແກ່

1. ທ້າວ ທະຕະລະຖາ
2. ທ້າວ ວິລຸນຫະກະ
3. ທ້າວ ວິຣູປັກຂະ
4. ທ້າວ ກຸເວຣະ (ກຸເວນ)

ທ້າວ ພະຍາທັງ 4 ນີ້ ເນົາຢູ່ໃນຊັ້ນຈາຕູມ ຫຼືເອີ້ນວ່າຈະຕູມມະຫາລາດ

ຈາຕູມ ແມ່ນຊື່ເມືອງສະຫວັນຊັ້ນທີ 1 ເຊິ່ງເປັນຊັ້ນຕ່ຳສຸດ ໃນຈຳນວນສະຫວັນ 6 ຊັ້ນ (ໂລກະບານທັງ 4 ຫຼືຈະຕຸໂລກະບານທັງ 4 ກໍໄດ້) ຈະຕຸທິດ



## ສຸກສະບາຍຫາຍໂຣຄາ

# ໝາກເດືອຍ

# ສາວແວ່ນ



ໝາກເດືອຍ ເປັນພືດທັນຍາຫານທີ່ເຕັມໄປດ້ວຍສານອາຫານຢ່າງຫຼວງຫຼາຍ ຄົນຈີນຈຶ່ງນິຍົມຮັບປະທານເປັນອາຫານຢ່າງແຜ່ຫຼາຍ ເພາະມີສັບພະຄຸນເປັນຢາອາຍຸວັດທະນະ ແລະ ຊ່ວຍບຳລຸງຮ່າງກາຍໃຫ້ແຂງແຮງ; ພ້ອມນັ້ນ, ຄົນລາວເຮົາກໍນິຍົມເອົາມາເຮັດນ້ຳຫວານ, ນ້ຳໝາກເດືອຍ..... ເພື່ອສຸຂະພາບ ແຕ່ທ່ານຮູ້ບໍວ່າ? ໝາກເດືອຍມີຄຸນປະໂຫຍດຄືແນວໃດແດ່? ດັ່ງນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ເຮົາມີຄຸນສົມບັດຂອງໝາກເດືອຍ ມານຳສະເໜີໃຫ້ແກ່ບັນດາທ່ານຮັບຮູ້ນຳກັນ.

- ເຮັດໃຫ້ລະບົບຂັບຖ່າຍດີ, ຫຼຸດອາການຖອກທ້ອງໄດ້ ເພາະໃນໝາກເດືອຍ ມີໄຍອາຫານຫຼາຍ ຈຶ່ງເຮັດໃຫ້ຂັບຖ່າຍສະດວກ;

- ເຮັດໃຫ້ນອນຫຼັບສະບາຍ ເພາະມີກົດອາມີໂນທີ່ຊ່ວຍກະຕຸ້ນການເຮັດວຽກຂອງຮໍໂມນເມລາໂທນິນ ເຊິ່ງຊ່ວຍໃຫ້ນອນຫຼັບໄດ້ດີ;

- ບຳລຸງສາຍຕາ ວິຕາມິນເອໃນໝາກເດືອຍ ຊ່ວຍເພີ່ມຄວາມສາມາດໃນການເບິ່ງເຫັນໃນບ່ອນທີ່ມີແສງສະຫວ່າງໜ້ອຍໃຫ້ເບິ່ງເຫັນໄດ້ຫຼາຍຂຶ້ນ ໂດຍສະເພາະຕອນກາງຄືນ;

- ບຳລຸງແຂ້ວ ແລະ ກະດູກໃຫ້ແຂງແຮງ ປ້ອງກັນໂຣກກະດູກຜ່ອຍ ພ້ອມທັງບຳລຸງເສັ້ນເອັນ ແລະ ຂໍ່ກະດູກນຳອີກ.

-ບຳລຸງຜິວເຮັດໃຫ້ຜິວເປັ່ງປັ່ງ ເພາະອຸດົມໄປດ້ວຍວິຕາມິນ ບີ 1 ແລະ ບີ 2 ຫາກຮັບປະທານເປັນປະຈຳ ຈະຊ່ວຍໃຫ້ຜິວພັນສົດໃສຍິ່ງຂຶ້ນ.

- ບຳລຸງໄຂ່ຫຼັງ ຊ່ວຍຂັບປັດສະວະ ແລະ ແກ້ອາການເຈັບທ້ອງ ຮັກສາໂຣກກະເພາະ ແລະ ລຳໄສ້ ພ້ອມທັງຊ່ວຍຫຼຸດຄໍເລສເຕີຣໍໃນເສັ້ນເລືອດນຳອີກ;

- ປ້ອງກັນຕີນມືມຶນຊາ ໃນໝາກເດືອຍມີວິນຕາມິນບີຫຼາຍ ຈຶ່ງຊ່ວຍແກ້ອາການມຶນຊາ ແລະ ແກ້ອາການກະຕຸກ, ຮ້ອນໃນ ແລະ ອາການລົງຂາວໃນແມ່ຍິງນຳອີກ.

**ຂໍ້ມູນຈາກ:**
**www.praram9.com**



## ພັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

*✻ ໂກຊີຮອດ**ສອງວັນສຳຄັນ** ນັ້ນຄືວັນ**ເດັກນ້ອຍສາກົນ** ແລະ **ວັນປູກຕົ້ນໄມ້ແຫ່ງຊາດ** ຫຼາຍພາກສ່ວນກະກຽມສະເຫຼີມສະຫຼອງ ເພື່ອເຮັດໃຫ້ວັນດັ່ງກ່າວ ມີບັນຍາກາດຟົດຟື້ນ ມ່ວນຊື່ນດ້ວຍຫຼາກຫຼາຍກິດຈະກຳ ສຳຄັນແມ່ນແຜນການກະກຽມປູກຕົ້ນໄມ້ ຄຽງຄູ່ໄປກັບການປູກຈິດສຳນຶກ ໃຫ້ແກ່ເດັກ ເພາະ **"ເດັກນ້ອຍໃນວັນນີ້ ຄືຜູ້ໃຫຍ່ໃນວັນໜ້າ" "ເດັກຄືອະນາຄົດຂອງຊາດ" "ເດັກສະຫຼາດພາຊາດຈະເລີນ"** ເພິ່ນວ່າ!*

*✻ **ສະ**ແດງຄວາມເສຍໃຈນຳ **ອ້າຍສົນທະວີ ວົງພະຈັນ** ຮອງຫົວໜ້າກົມສື່ມວນຊົນ ສະພາແຫ່ງຊາດ ທີ່ສູນເສຍຍາດ ຄື **ຮອ ຄຳແກ້ວ ຫຼວງໂຄດ** (ຜູ້ເປັນອ້າຍ) ທ່ານໄດ້ຈາກໂລກນີ້ໄປຢ່າງບໍ່ມີວັນຫວນກັບເມື່ອອາທິດຜ່ານມາ ຄົນສະພາ**ຮ່ວມໄວ້ອາໄລ**ເຫດການສູນເສຍ **ຂໍແບ່ງເບົາຄວາມທຸກ**ໂສກໂສກາດ້ວຍ ຂໍໃຫ້ດວງວິນຍານອ້າຍທະຍານບິນໄປສູ່ແດນສະຫວັນຊັ້ນຟ້າ ທີ່ຄົນເອົ້າຊ່າລືນັ້ນທ້ອນ!.*

## ຊວນຍິ້ມ

# ແອ່ນຕຸ້ງ

### ເຫຼົ້າຫຼືຄືສາເຫດ?

ນັກຂ່າວໄປສຳພາດຂໍທານຄົນໜຶ່ງ ວ່າເປັນຫຍັງຈຶ່ງມາຂໍທານແບບນີ້

\+ ແຕ່ກ່ອນຂ້ອຍກະມີວຽກເຮັດງານທຳ ມີເງິນລ້ຽງລູກລ້ຽງເມຍ ຢູ່ມາໄລຍະໜຶ່ງຂ້ອຍເລີ່ມຕິດເຫຼົ້າ, ວຽກເຮົາກະໄລ່ອອກ ເມຍກໍໜີ; ຕໍ່ມາຂ້ອຍເຊົາເຫຼົ້າ ແລະ ຊອກວຽກໄດ້ອີກ ແລະ ເມຍຂ້ອຍກໍກັບມາເໝືອນເດີມ.

- ອ້າວ! ຕອນນີ້ຄືວ່າເປັນຂໍທານອີກຊັ້ນບາ?

\+ ພໍເມຍກັບມາ ຂ້ອຍກໍເລີ່ມກິນເຫຼົ້າຄືນ.

-?!?



## ອາດ ກະວີລາວ

# ທິດໂສສິງໄສ

# ໂດຍ: ໂອທອງ ຄຳອິນຊຸ

✻ ທິດໂສໂວໂວກເວົ້າ
ກູ ສົງໄສສັງຄົມ
ໂຄສະນາຊວນຊື້
ທັງລົດລາເຄື່ອງໃຊ້

ແຮງເຮັ່ງເຫຼືອຫຼາຍ
ເຄື່ອງດາວດຽວນີ້
ຊວນດາວດີຢູ່
ເຮືອນຫັ້ນແຮ່ງຫຼາຍ

✻ ກູກະເລີຍຢາກໄດ້
ເລືອກເບິ່ງຫຼັງລາຄາ
ໄປນັ່ງ ຟັງເຂົາເວົ້າ
ອອນຊອນສຽງອິ່ນອ້ອຍ

ເຮືອນໃໝ່ຫຼັງງາມ
ຕ່ຳຕາມເງິນໜ້ອຍ
ການດາວການຈ່າຍ
ອອຍໃຫ້ຮີບດາວ

✻ ເຂົາບອກ ຊາວສີ່ລ້ານ
ແລ້ວຈ່າຍເປັນລາຍເດືອນ
ກູລະ ຟັງເຂົາເວົ້າ
ເງິນເດືອນກູທີ່ໄດ້

ວາງກ່ອນຕອນດາວ
ແຕ່ພຽງສາມລ້ານ
ອອນຊອນນຳຢູ່
ສອງລ້ານຕໍ່ເດືອນ

✻ ກູກະເລີຍບໍ່ກ້າ
ກົ້ມໜ້າຄືນມາເຮືອນ
ມາຄຶດຄືນເລີຍຄ້າມ
ງຶດຫຼາຍ ເດໝູ່ຜູ້

ໄປຕໍ່ຄວາມເຂົາ
ນັ່ງເຫງົາຊຶງເຊື້
ຄາໃຈແນວໜຶ່ງ
ເຮືອນໃກ້ມໍ່ກູ

✻ ມັນເຮັດການຢູ່ໜ້ອງ
ເງິນເດືອນມັນ
ເປັນຫຍັງມັນດາວໄດ້
ທັງລົດຄັນໃໝ່ນັ້ນ

ການບ່ອນດຽວກັນ
ບໍ່ເຖິງສາມລ້ານ
ທັງເຮືອນຫຼັງໃຫຍ່
ດາວພ້ອມພາບດຽວ.




## ຄະຕິເຕືອນໃຈ

# ດອກຊະຍອມ

ຢ່າໄດ້ຄິດໃລບລົ້ນ ຫຼົງໃຜດຊີພາຜິດ
ຕິດປີໄສຕາມໃຈ ບໍ່ຫ່ວງໃຜພໍ່ໜ້ອຍ
ປ່ອຍຄາລົມຊົມໂຊ້ ສະໜຸກໄປວັນໃໝ່
ໄພຊິລຸກອີບໄໝ້ ໄພຮ້າຍຊິຮ່ອມເຮືອນ




# ບ້ານ - ເຮືອນ

ສຽງເພງຂອງ ສົມມີໄຊ ເດໄຊ ດັງແວ່ວມາແຕ່ໃສ: "ບ້ານເຮືອນຄຽງກັນ ທຸກມື້ທຸກວັນໄດ້ແຕ່ລັກເບິ່ງລັກແຍງ" ແລ້ວສຽງປະກາດທາງໂທລະໂຂ່ງນ້ອຍຊະນິດມືຖືກໍດັງກ້ອງໄປທົ່ວເດີ່ນໂຮງຮຽນ:

"ເທບສັກດາ ກັບບ້ານເດີ!"

ແລະຄາວໜຶ່ງສຽງປະກາດກໍດັງອອກມາອີກວ່າ:

"ທ້າວບຸໂດ້ ເມືອເຮືອນເດີ, ພໍ່ມາຮັບແລ້ວ!"

ຈາກຄວາມເວົ້າຂ້າງເທິງນີ້ ເຮົາຈະເຫັນໄດ້ວ່າ ວະລີທີ່ມີຄວາມໝາຍວ່າ "ກັບຄືນສູ່ທີ່ພັກອາໄສຂອງຕົນ" ມີຢູ່ສອງແບບ ຄື "ກັບບ້ານ" ແລະ "ເມືອເຮືອນ" ເຊິ່ງສອງກຸ່ມຄຳນີ້ລ້ວນແຕ່ມີມະໂນພາບຫຼືຄວາມໝາຍອັນດຽວກັນ. ຕ່າງແຕ່ວ່າບາງຄົນລຶ້ງວະລີໃດແລ້ວ ເມື່ອໄດ້ຍິນຜູ້ອື່ນໃຊ້ວະລີທີ່ຕ່າງຈາກຕົນ ກໍຈະຮູ້ສຶກສິແປກຫູ. ເພື່ອໃຫ້ພວກເຮົາເຂົ້າໃຈແຈ້ງກ່ຽວກັບການນຳໃຊ້ຄຳສັບ "ບ້ານ" ແລະ "ເຮືອນ" ໃນປັດຈຸບັນ. ລາຍການພາສາລາວມື້ລະຄຳສອງຄຳວັນນີ້ ຂໍນຳພາບັນດາທ່ານເຂົ້າສູ່ບັນຍາກາດຂອງການອະທິບາຍຄຳສັບທັງສອງໄດ້ດັ່ງນີ້:

ຄຳວ່າ "ບ້ານ" ແລະ "ເຮືອນ" ທັງສອງຄຳນີ້ຖ້າໃຫ້ໄປຖາມເດັກນ້ອຍສໍ່າຫົວໝາກອກ ຫຼືຜູ້ເຖົ້າຫົວຂາວຈຸ່ນພຸ່ນຢູ່ໃນບ້ານໃນເຮືອນ ກໍຈະສາມາດເຂົ້າໃຈກັນໄດ້ໂລດ ໂດຍບໍ່ຕ້ອງໄປເປີດວັດຈະນານຸກົມຂອງມະຫາສິລາ ຫຼືຂອງ ດຣ. ທອງຄຳ ອ່ອນມະນີສອນ ມາເບິ່ງດອກ ເພາະທັງສອງຄຳນີ້ ພວກເຮົາໄດ້ນຳໃຊ້ເຂົ້າໃນການເວົ້າມາຕັ້ງແຕ່ສະໄໝອີ່ປຸ່ຍີ່ປູ້ພຸ້ນແລ້ວ.

ແຕ່ສອງຄຳນີ້ ບາງຄັ້ງກໍໃຊ້ສັບສົນກັນ ຈົນເຮັດໃຫ້ພວກເຮົາເຊິ່ງສ່ວນຫຼາຍແລ້ວກໍມີຄວາມທະນົງໃຈຕໍ່ຄວາມເປັນຊາດລາວ ບາງເທື່ອມີຄວາມຮູ້ສຶກວ່າ ນີ້ເຮົາກຳລັງໃຊ້ຄຳສັບພາສາເພື່ອນບ້ານຢູ່ຫວາ!?!

ໃຫ້ເຂົ້າໃຈນຳກັນວ່າທັງສອງຄຳນີ້ລ້ວນແຕ່ເປັນຄຳລາວເດີມ ເຊິ່ງໃນວັດຈະນານຸກົມພາສາລາວແຕ່ລະເຫຼັ້ມໄດ້ໃຫ້ຄຳນິຍາມໄປໃນລວງດຽວກັນດັ່ງນີ້:

"ບ້ານ" ແມ່ນທີ່ດິນບ່ອນມີເຮືອນຫຼາຍຫຼັງຕັ້ງຢູ່ນຳກັນ ເຊັ່ນ ບ້ານດົງໂດກ, ບ້ານດົງປ່າລານ, ບ້ານດົງກະລົມ ດັ່ງນີ້ເປັນຕົ້ນ. "ບ້ານ" ໃນຄວາມໝາຍນີ້ ກົງກັບພາສາອັງກິດວ່າ village (ພາສາປາລີ: ຄາມະ).

"ເຮືອນ" ແມ່ນສິ່ງທີ່ປຸກຂຶ້ນເປັນບ່ອນຢູ່ ເຊັ່ນ ເຮືອນແມ່ທ້າວເອັຍ, ເຮືອນນາຍບ້ານ, ເຮືອນບັກທຳແຫຼ ດັ່ງນີ້ເປັນຕົ້ນ."ເຮືອນ"ໃນຄວາມໝາຍນີ້ກົງກັບພາສາອັງກິດວ່າhouse. ພ້ອມກັນນັ້ນ ວັດຈະນານຸກົມລາວສະບັບຂອງ ດຣ. ທອງຄຳ ອ່ອນມະນີສອນ ຍັງມີຄຳວ່າ ບ້ານເຮືອນ ເຊິ່ງມີຄວາມໝາຍວ່າ ເຮືອນຢູ່ອາໄສ. ນອກນັ້ນຍັງມີຄຳທີ່ມີຄວາມໝາຍອັນດຽວກັນກັບບ້ານເຮືອນ ກໍຄື ເຮືອນຊານບ້ານຊ່ອງ ເຊິ່ງກົງກັບພາສາອັງກິດວ່າ home, house (ພາສາປາລີ: ເຄຫະ).

ເພື່ອໃຫ້ກະຈ່າງແຈ້ງຂຶ້ນຕື່ມ, ພວກເຮົາບໍ່ຄວນລືມເປີດເບິ່ງວັດຈະນານຸກົມສອງພາສາ: ລາວແລະພາສາອື່ນ.

- ເມື່ອໄປເປີດເບິ່ງວັດຈະນານຸກົມລາວ-ຝຣັ່ງ ປີ 1970 ກໍໄດ້ໃຫ້ຄວາມໝາຍ "ບ້ານ" ໂດຍແປເປັນພາສາຝຣັ່ງວ່າ "le village, lehameau,lebourg,lequartier(d'uneville),lamaison, chez soi" ເຊິ່ງໃນທີ່ນັ້ນ ກໍໄດ້ແປ "ບ້ານ" ເປັນ "ເຮືອນ" ແລະບ່ອນພັກພາອາໄສ.

- ກໍເຊັ່ນດຽວກັບວັດຈະນານຸກົມລາວ-ອັງກິດປີ 1972 ກໍໄດ້ໃຫ້ຄວາມໝາຍ ບ້ານ ໂດຍແປເປັນພາສາອັງກິດວ່າ "home, house, village".

- ວັດຈະນານຸກົມລາວ-ລັດເຊຍ ປີ 1982 ກໍໄດ້ໃຫ້ຄວາມໝາຍ "ບ້ານ" ໂດຍແປເປັນພາສາລັດເຊຍວ່າ "деревня, домой, дом"ແລະຍັງມີຕົວຢ່າງວ່າລາວຢູ່ບ້ານແປເປັນລັດເຊຍ:"ондома".

- ວັດຈະນານຸກົມລາວ-ຫວຽດ ປີ 1995 ກໍໄດ້ໃຫ້ຄວາມໝາຍ "ບ້ານ" ໂດຍແປເປັນພາສາຫວຽດນາມວ່າ "làng, nhà" ແລະຍົກຕົວຢ່າງ ລາວຢູ່ບ້ານ ແປເປັນຫວຽດວ່າ "nó ở nhà" ຈາກການຊອກຫາຄວາມໝາຍຂອງຄຳວ່າ "ບ້ານ" ແລະ "ເຮືອນ" ຂ້າງເທິງນີ້ ແລະອີງໃສ່ໃນການນຳໃຊ້ໃນຊີວິດຕົວຈິງຂອງຄົນລາວ ໂດຍສະເພາະແມ່ນຄົນລາວທີ່ຢູ່ໃນຕົວເມືອງ ຈະເຫັນໄດ້ວ່າມີໃຊ້ຄຳວ່າ "ບ້ານ" ແທນໃຫ້ "ເຮືອນຢູ່ອາໄສ" ເປັນສ່ວນຫຼາຍ ເຊັ່ນ "ເມືອບ້ານກ່ອນເດີ", "ວັນເສົານີ້ ບໍ່ໄປໃສດອກ". ຊິນອນອ່ານປຶ້ມຢູ່ບ້ານ. ຖ້າຈະເວົ້າໃຫ້ຖືກ ກໍຄວນວ່າ "ເມືອບ້ານເຮືອນກ່ອນເດ" ແຕ່ບໍ່ມີໃຜເວົ້າ ເພາະໃນຊີວິດຕົວຈິງ ຄົນເຮົາມັກຈະເວົ້າສັ້ນ ເຊິ່ງຄຳວ່າ "ບ້ານ" ຫຼື "ເຮືອນ" ອາດຈະຖືກຕັດອອກໄປ, ບາງຄົນກໍເວົ້າວ່າ "ເມືອເຮືອນກ່ອນເດີ". ທັງສອງ ຖືວ່າໄດ້ຄວາມໝາຍຄືກັນ.

ຈາກບ່ອນນີ້ ຈຶ່ງເຮັດໃຫ້ວັດຈະນານຸກົມສອງພາສາ: ລາວ ແລະພາສາອື່ນ ໄດ້ບັນຈຸຄຳວ່າ "ບ້ານ" ທີ່ໝາຍເຖິງ "ເຮືອນຢູ່ອາໄສ" ໃສ່ໃນວັດຈະນານຸກົມຂອງຕົນນັບແຕ່ຊຸມປີ 70 ຂອງສະຕະວັດທີ່ແລ້ວເປັນຕົ້ນມາ ແລະວັດຈະນານຸກົມລາວ-ຫວຽດ ສະບັບປີ 2016 ກໍໄດ້ບັນຈຸຄຳວ່າ ບ້ານ ທີ່ມີຄວາມໝາຍສອງຢ່າງ: ບ້ານ1 ນ. bản, làng, thôn. ບ້ານ2 ນ. nhà. ກັບບ້ານ: Về nhà.

ນອກຈາກນັ້ນ ຄຳວ່າບ້ານທີ່ມີຄວາມໝາຍວ່າ "ບ່ອນຢູ່ອາໄສ" ຍັງໃຊ້ເປັນສັບທາງການໃນວົງການສຶກສານຳອີກ ຄື ຄຳວ່າ "ວຽກບ້ານ" (homework), ຖ້າປ່ຽນໄປເວົ້າວ່າ "ວຽກເຮືອນ" ມັນກໍມີຄວາມໝາຍໄປເຖິງການຊັກເຄື່ອງ, ແຕ່ງຢູ່ຄືກິນ, ອະນາໄມເຮືອນຊານ ເຊິ່ງໃນພາສາອັງກິດເອີ້ນວ່າ "housework". ຄັນຫາກອາຈານບອກໃຫ້ນັກຮຽນຢ່າລືມເຮັດວຽກເຮືອນເດີ! ມື້ຕໍ່ມານັກຮຽນກໍຄົງນຳໃຊ້ຫົວຊຽງໜັງ ແລະບອກອາຈານວ່າ "ເຮືອນຂອງນ້ອງສະອາດງາມດີ ເພາະໄດ້ອະນາໄມຮຽບຮ້ອຍແລ້ວ!" ບາດນີ້ມາເວົ້າເຖິງ "ບ້ານພັກ - ເຮືອນພັກ" ຄົນລາວນິຍົມໃຊ້ຄຳສັບໃດຫຼາຍກວ່າກັນ? ຕາມຄວາມນິຍົມປັດຈຸບັນ ພວກເຮົາມັກໃຊ້ຄຳວ່າ "ເຮືອນພັກ" ຫຼາຍກວ່າ ເພາະມີຜູ້ມາທັກທ້ວງວ່າ "ບ້ານພັກ" ບໍ່ຖືກຕ້ອງຈຶ່ງພາກັນຫັນມາໃຊ້ "ເຮືອນພັກ" ຢ່າງເປັນຂະບວນ. ແຕ່ກໍຍັງມີບາງຄົນຍັງໃຊ້ຄຳວ່າ "ບ້ານພັກ" ຕິດສົບຕິດປາກຢູ່ ເພາະລຶ້ງເວົ້າມາແຕ່ສະໄໝເກົ່າ.

ຄຽງຄູ່ກັນນັ້ນ, ຄຳສັບທີ່ຕິດພັນກັບຄຳວ່າ "ບ້ານ" ທີ່ໃຊ້ປັດຈຸບັນຍັງມີຫຼາຍສັບ ເຊັ່ນ "ນາຍບ້ານ" ເຊິ່ງເມື່ອກ່ອນນິຍົມເອີ້ນ "ພໍ່ບ້ານ" ຫຼື "ກວານບ້ານ". ແລະກໍຍັງມີຄຳວ່າ ແມ່ບ້ານ ເຊິ່ງຕ່າງກັບຄຳວ່າ "ແມ່ເຮືອນ": "ແມ່ບ້ານ" ໝາຍເຖິງແມ່ຍິງທີ່ມາເປັນຜູ້ຮັບໃຊ້ວຽກ. ສ່ວນ "ແມ່ເຮືອນ" ໝາຍເຖິງ "ແມ່ຍິງທີ່ເປັນຮອງຫົວໜ້າຄອບຄົວ ຫຼືແມ່ເຈົ້າເຮືອນ".

ສະຫຼຸບລວມແລ້ວ ຄຳວ່າ ບ້ານ ແລະ ເຮືອນ ໃນເບື້ອງຕົ້ນມີຄວາມໝາຍຕ່າງກັນ ແຕ່ກໍມີສ່ວນກ່ຽວພັນກັນ ເພາະບ້ານປະກອບດ້ວຍເຮືອນຫຼາຍຫຼັງ. ແຕ່ເວລາຜ່ານໄປ ຄຳວ່າ "ບ້ານ" ແລະ "ເຮືອນ" ມັກມາຢູ່ຮ່ວມກັນ ເຊັ່ນ ເຮືອນຊານບ້ານຊ່ອງ, ຢູ່ບ້ານຢູ່ເຮືອນ, ບ້ານເຮືອນ ໂດຍໝາຍເຖິງ "ບ່ອນພັກພາອາໄສ". ຢູ່ໄປດົນໆ "ບ້ານເຮືອນ" ທີ່ໝາຍເຖິງ "ບ່ອນພັກພາອາໄສ" ກໍຍັງແຕ່ "ບ້ານ". ດັ່ງນັ້ນ, ຈຶ່ງເກີດມີວະລີທີ່ໝາຍເຖິງ "ຄືນສູ່ຢາວເຮືອນຂອງຕົນ" ເປັນ "ກັບບ້ານ, ເມືອບ້ານ" ຄືດັ່ງພວກເຮົາເຈົ້າຂ້ອຍພາກັນໄດ້ຍິນເກືອບວ່າຊູ່ມື້.

ທ່ານຜູ້ອ່ານເດລະ, ເຄີຍໃຊ້ວະລີ "ກັບບ້ານ, ເມືອບ້ານ" ແທນຄຳວ່າ "ເມືອເຮືອນ" ບໍ່?




# ພົນລະເມືອງຕວກກີ ໃຊ້ສິດເລືອກຕັ້ງທົ່ວໄປ



ອີງຕາມການລາຍງານຂ່າວໃນວັນທີ 14 ພຶດສະພານີ້ ໃຫ້ຮູ້ວ່າ, ມີຜູ້ມີສິດເລືອກຕັ້ງຕວກກີ ປະມານ 64 ລ້ານຄົນໃນຈຳນວນປະຊາກອນເກືອບ 85 ລ້ານຄົນຂອງປະເທດ ໄດ້ຄ່ອຍໆອອກໄປປ່ອນບັດການເລືອກຕັ້ງແຫ່ງຊາດ ນີ້ແມ່ນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ທັງໝົດ 600 ຄົນ ແລະ ເປັນການເລືອກຕັ້ງປະທານາທິບໍດີ. ຖ້າບໍ່ມີຜູ້ສະໝັກທ່ານໃດໄດ້ຮັບຄະແນນສຽງຫຼາຍກວ່າ 50% ຈາກຮອບທຳອິດ ຈະມີການໃຫ້ລົງຄະແນນຕັດສິນຮອບທີ 2 ໃນວັນທີ 28 ພຶດສະພານີ້ ເຊິ່ງຈະເປັນການແຂ່ງຂັນລະຫວ່າງຜູ້ສະໝັກສອງທ່ານທີ່ໄດ້ຮັບຄະແນນສູງສຸດຈາກຮອບທຳອິດ.

ບັນດານັກວິເຄາະກໍໃຫ້ຄວາມເຫັນໃນທາງດຽວກັນວ່າ ການເລືອກຕັ້ງທົ່ວໄປຂອງຕວກກີ ແມ່ນການລົງປະຊາມະຕິກ່ຽວກັບການປົກຄອງທີ່ແກ່ຍາວເປັນເວລາ 2 ທົດສະວັດຂອງພັກຍຸຕິທຳ ແລະ ການພັດທະນາ (AKP) ແລະ ປະທານາທິບໍດີ ຣີເຊັບ ເທຢິບ ເອີໂດກັນ (Recep Tayyip Erdogan) ເປັນຜູ້ນຳທີ່ດຳລົງຕຳແໜ່ງຍາວທີ່ສຸດໃນປະຫວັດສາດການເມືອງຕວກກີ.

ເຖິງຢ່າງໃດກໍຕາມ, ບໍ່ສາມາດປະຕິເສດໄດ້ວ່າໃນໄລຍະ 20 ປີທີ່ຜ່ານມາ, ທ່ານ ຣີເຊັບ ເທຢິບ ເອີໂດກັນ ອາຍຸ 69 ປີ ໄດ້ເຮັດໃຫ້ຕວກກີຮັ່ງມີໃນທຸກດ້ານ. ຄຽງຄູ່ກັບການສ້າງອິດທິພົນທາງດ້ານການເມືອງ ຈົນຕວກກີໄດ້ກາຍເປັນໜຶ່ງໃນບັນດາປະເທດທີ່ມີບົດບາດອັນໃຫຍ່ຫຼວງໃນພາກພື້ນສາກົນ.




ດ້ວຍຄວາມທີ່ປະເທດຂອງເຮົາສ່ວນໃຫຍ່ ໃນການເຮັດຕົ້ນ ພູດທະສາສະໜາ ນິທານພື້ນເມືອງ ຫຼື ເປັນເລື່ອງເລົ່າຕ່າງໆ ຊ່ວຍໃຫ້ເຂົ້າເຖິງຄວາມຄິດງານໄດ້ງ່າຍ ໂດຍສະເພາະ ສຳລັບເດັກ ເຮົາສາມາດໃຊ້ນິທານໃນການປູກຝັງ ແລະ ທັດສະນະຄະຕິທີ່ດີໄດ້ ໂດຍທາງອ້ອມ ພໍ່ ແລະ ແມ່, ຄູ-ອາຈານ ຄວນຟື້ນຟູນຳໃຊ້ນິທານດັ່ງກ່າວໃຫ້ຫຼາຍໆຂຶ້ນ.

# ເງົ່າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

## ຫຼາຍອັນພົນແນວກ່ຽວກັບສາສະໜາ

ໃນບົດປະຈຳວັນນີ້ ຂໍນຳທ່ານຜູ້ອ່ານໄປຮູ້ກັບຫຼາຍເລື່ອງທີ່ພົວພັນກັບສາສະໜາ ເພື່ອເບິ່ງໄວ້ເປັນບົດຮຽນ ເຊັ່ນ: ບັນຫາການແຜ່ເງິນເພື່ອການກຸສົນ, ການຫຼອກລວງໃຫ້ຄົນຫຼົງເຊື່ອ ຫຼືບໍ່ເຊື່ອ, ພັນທະຂອງນັກບວດໃນການເສຍພາສີລາຍໄດ້, ພະສົງກັບການລະເມີດກົດໝາຍ ກໍຄືການໝິ່ນປະໝາດສາສະໜາ. ເລື່ອງລາວທັງໝົດນີ້ ໄດ້ແກະມາຈາກຂ່າວຕ່າງປະເທດ ທີ່ຫຼາຍທ່ານກໍອາດເຄີຍໄດ້ອ່ານມາແລ້ວ ແຕ່ມື້ນີ້ຂໍເອົາມາກອງໂອະໂຍະໄວ້ໃນບົດດຽວ ດັ່ງຕໍ່ໄປນີ້: ມີຂ່າວຈາກຍີ່ປຸ່ນ ໃນທ້າຍປີ 2022 ທີ່ບອກວ່າ ລັດຖະສະພາຂອງປະເທດນີ້ ໄດ້ຮັບຮອງເອົາກົດໝາຍ ໃນວັນທີ 10 ທັນວາ 2022 ທີ່ກຳນົດຫ້າມອົງການທາງສາສະໜາ ຂໍການບໍລິການ ຫຼື ຂໍແຜ່ເງິນ ກໍຄືວັດຖຸປັດໄຈຈາກບຸກຄົນໃນສັງຄົມດ້ວຍວິທີການຕ່າງໆ ຢ່າງເດັດຂາດ. ໃນຂໍ້ຫ້າມໄດ້ໃຊ້ຄຳວ່າ "ຫ້າມສ້າງຄວາມສັບສົນ" ດ້ວຍວິທີການສະເພາະໃດໆທັງສິ້ນເພື່ອໃຫ້ໄດ້ການບໍລິຈາກຕາມຈຸດປະສົງ. ຄຳວ່າ "ຄວາມສັບສົນ" ໃນທີ່ນີ້ ໝາຍເຖິງການຫຼອກລວງຜູ້ອື່ນໃຫ້ຫຼົງໄຫຼ, ຫຼົງເຊື່ອແລ້ວໃຫ້ທານ ຫຼື ໃຫ້ມີຄວາມຢ້ານກົວຖ້າບໍ່ໃຫ້ທານຕາມການຂໍແຜ່ ໂດຍບຸກຄົນ ຫຼື ອົງການທາງສາສະໜາ. ກົດໝາຍຍັງໄດ້ກຳນົດ ບົດລົງໂທດຕໍ່ສະມາຊິກຂອງອົງການຈັດຕັ້ງທາງສາສະໜາທີ່ລະເມີດກົດໝາຍສະບັບນີ້ ດ້ວຍການຕັດອິດສະຫຼະພາບ ສູງສຸດ 1 ປີ ຫຼື ປັບໃໝເປັນເງິນ 1 ລ້ານເຢັນ (ປະມານ 130 ລ້ານກີບ) ເຖິງແມ່ນບຸກຄົນ ຫຼື ການຈັດຕັ້ງທາງສາສະໜາດັ່ງກ່າວ ຈະມີຂໍ້ອ້າງວ່າ ໄດ້ຮັບເງິນ ຫຼື ວັດຖຸທີ່ກ່ຽວຂ້ອງມາຈາກນ້ຳໃຈສັດທາ ຫຼື ດ້ວຍຄວາມສະໝັກໃຈກໍຕາມ. ແນວໃດກໍດີ, ກົດໝາຍສະບັບນີ້ຍັງປະເຊີນກັບບັນຫາຖົກຖຽງກັນຢ່າງກວ້າງຂວາງໃນສັງຄົມຍີ່ປຸ່ນ ເພາະມັນພົວພັນກັບສິດທິຂອງພົນລະເມືອງໃນການນຳໃຊ້ຊັບສິນສ່ວນຕົວຂອງພວກເຂົາ ກໍຄືເສລີພາບໃນການນັບຖືສາສາໜາ. ຍ້ອນແນວນັ້ນເອງ, ທາງການຍີ່ປຸ່ນຍັງຈະໄດ້ພິຈາລະນາ ແລະ ທົບທວນຄືນ ກົດໝາຍສະບັບນີ້ ພາຍຫຼັງໄດ້ປະກາດໃຊ້ໄປແລ້ວ ເປັນເວລາ 2 ປີ.

ກ່ອນໜ້ານັ້ນຫຼາຍປີ, **ຢູ່ປະເທດ ສ.ເກົາຫຼີ** ກໍໄດ້ມີການປະກາດໃຊ້ກົດໝາຍທີ່ກຳນົດໃຫ້ບັນດານັກບວດ ໃນສາສະໜາຕ່າງໆ ເຮັດພັນທະເສຍພາສີລາຍໄດ້ຂອງພວກເຂົາ ຈາກການໃຫ້ທານຂອງບັນດາເຈົ້າສັດທາ ໂດຍໄດ້ກຳນົດຢ່າງຈະແຈ້ງວ່າ: "ທຸກຄົນທີ່ມີລາຍຮັບ ຈະຕ້ອງມີພັນທະໃນການເສຍພາສີ" ຕາມກົດໝາຍ. ໃນທ້າຍເດືອນກໍລະກົດ 2020 ໄດ້ມີເຫດການພວກຫົວຮຸນແຮງຢູ່ເມືອງ ມານໂມ ປະເທດ ສະວີເດັນ ຫຼື ຊູແອດ ໃຊ້ໄຟຈູດຄຳພີຄູຣານ ຂອງສາສະໜາ ອິຣານ. ຄຳພີ ທີ່ວ່ານີ້ ບັນຈຸຄຳສອນທາງສາສະໜາ ອິດສະລາມທັງໝົດ, ຈຶ່ງຖືວ່າເປັນປຶ້ມສັກສິດ ບໍ່ຕ່າງຫຍັງກັບປຶ້ມໄຕປິດົກ ຂອງສາສະໜາພຸດພວກເຮົາ. ການຈູດປຶ້ມຄຳພີ ຄູຣານ ຄັ້ງນັ້ນ ໄດ້ສ້າງຄວາມແຄ້ນເຄືອງແຜ່ກະຈາຍໄປທົ່ວໂລກ ໂດຍສະເພາະແມ່ນໃນບັນດາປະເທດ ທີ່ມີຊາວມຸດສະລິມເປັນສ່ວນໃຫຍ່.

ທ່ານ ມີເກນ ມາຣາຕີໂນ ຫົວໜ້າສຳນັກງານສົ່ງເສີມຄວາມສຳພັນ ແຫ່ງຄວາມສີວິໄລ, ຂຶ້ນກັບອົງການສະຫະປະຊາຊາດ (UN Alliance of Civilisation) ທີ່ເຮັດໜ້າທີ່ປົກປ້ອງສັດທາຄວາມເຊື່ອໃນຫຼັກການ ຂອງສາສະໜາ ກໍໄດ້ອອກມາປະນາມເຫດການດັ່ງກ່າວຢ່າງເຄັ່ງຂຶມ ແລະ ຮຽກຮ້ອງໃຫ້ບັນດາ ຜູ້ນຳທາງສາສະໜາໃນທົ່ວໂລກ ເອົາມາດຕະການອັນຈຳເປັນ ເພື່ອປົກປ້ອງຄຳພີ ຄຳພີທາງສາສະໜາ, ສະຖານທີ່ຂາບໄຫວ້ ສັກກະລະບູຊາຕ່າງໆ ຈາກການທຳລາຍໂດຍກຸ່ມຫົວຮຸນແຮງ.

**ຢູ່ປະເທດມຽນມາ** ບ່ອນທີ່ມີຄົນນັບຖືສາສະໜາພຸດເປັນສ່ວນຫຼາຍນັ້ນ ກໍມີກົດໝາຍຄຸ້ມຄອງສາສະໜາ, ທັງສາສະໜາພຸດ ແລະ ສາສະໜາອື່ນໆ ທີ່ມີຄົນເຊື່ອຖື. ກົດໝາຍໄດ້ກຳນົດຂໍ້ບັງຄັບລະອຽດກີກີ ກ່ຽວກັບຫຼັກການປະຕິບັດ ໄປຄຽງຄູ່ກັບບົດລົງໂທດ ຕໍ່ຜູ້ລະເມີດ ເຊັ່ນ ເຂົ້າວັດບໍ່ປົດໝວກ, ເຂົ້າສະຖານທີ່ປະຕິບັດທຳບໍ່ປົດເກີບ, ການຈັບບາຍແຕະຕ້ອງພະພຸດທະຮູບແບບບໍ່ເຄົາລົບ, ການນຳໃຊ້ຮູບພະສົງ, ພະພຸດທະຮູບ ຫຼື ເຄື່ອງສັກກະລະບູຊາເພື່ອເປົ້າໝາຍທາງເສດຖະກິດ ແລະ ອື່ນໆ . ເມື່ອປະມານ 7 ປີຜ່ານມາ ກໍມີຂ່າວວ່າ ທາງການ ມຽນມາ ໄດ້ລົງໂທດ ພະອາຈານທີ່ຊື່ວ່າ ພະວິຣະທຸ ດ້ວຍການຕັດສິດບໍ່ໃຫ້ເພິ່ນສູດ ຫຼື ເທດ ເປັນເວລາ 1 ປີເຕັມໆ ຍ້ອນວ່າເພິ່ນເປັນຜູ້ໜຶ່ງທີ່ນຳພາພະສົງ ແລະ ຊາວພຸດມຽນມາ ລຸກຂຶ້ນຕໍ່ສູ້ຕ້ານກຸ່ມຄົນທີ່ນັບຖື ສາສະໜາອິດສະລາມຈົນກາຍເປັນເຫດການປະທ້ວງໃຫຍ່ໃນມຽນມາ ໃນເວລານັ້ນ.




## ດີກວ່າ ຄູນ້ອງ

*#ບ່າວກະບື*

ຄູເວົ້າກັບນັກຮຽນສະໝອງປຶກຄົນໜຶ່ງວ່າ: "ເມື່ອເຮົາອາຍຸສໍ່ໂຕ, ເຮົາສາມາດຕອບຄຳຖາມວິຊາປະຫວັດສາດໄດ້ທຸກຂໍ້ ".

ນັກຮຽນເວົ້າຕອບວ່າ: ແມ່ນແທ້, "ແຕ່ອ້າຍຄູລືມໄປວ່າ ຄູຂອງອ້າຍຄູຕອບນັ້ນດີກວ່າຄູຂອງນ້ອງຕອບນີ້".

## BETTER THAN MINE

***#BAOKBU***

**A** teacher said to a dull pupil:

"When I was your age, I could answer any questions in history".

"Yes", said the pupil, "But you forget that your teacher was better than mine.

ອ່ານມ່ວນ ຊວນ ຍິ້ມ



ນ້ຳຖ້ວມໝົດບ້ານ ຍ້ອນທ່ານຖົມຮ່ອງ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສິສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກິ່ງໃຈ ແສງອຳພັນ
ນາງ ກຸກກິກ ບຸດດາໄຊ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ນາງ ນິດຕາ ຄຸນປາກດີ